# ບົດບາດຍິງ-ຊາຍ ໃນວຽກງານ ເຣດ+

## ປື້ມຄູ່ມືສຳລັບຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ

ຄຳຖາມ ແລະ ຄຳຕອບ



RECOFTC
THE CENTER FOR PEOPLE AND FORESTS

**ບົດບາດຍິງ-ຊາຍ ໃນວຽກງານ ເຣດ+ (REDD+):** *ປຶ້ມຄູ່ມືສໍາລັບຜູ້ອໍານວຍຄວາມສະດວກຢູ່ຂັ້ນຮາກຖານ*
ຄໍາຖາມ ແລະ ຄໍາຕອບ

ສະຫງວນລິຂະສິດ © ອົງການ RECOFTC ເດືອນພະຈິກ 2013
ບາງກອກ ປະເທດ ໄທ

ປະກອບຮູບພາບທັງໝົດໂດຍ ອົງການ RECOFTC

ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນປຶ້ມຄູ່ມືສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນປຶ້ມຄູ່ມືສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ເອກະສານສະບັບນີ້ ແມ່ນຜົນຜະລິດໜຶ່ງຈາກໂຄງການທີ່ໄດ້ຮັບທຶນຊ່ວຍເຫລືອຈາກອົງການເພື່ອການຮ່ວມມືພັດທະນາຂອງປະເທດນອກແວ (NORAD). ຢ່າງໃດກໍ່ຕາມ, ທັດສະນະຄໍາຄິດ-ຄໍາເຫັນ ແລະ ຂໍ້ມູນໃນເອກະສານນີ້ ສູນຝຶກອົບຮົມປ່າໄມ້ຊຸມຊົນພາກພື້ນອາຊີ-ປາຊີຟິກ (RECOFTC) - ສູນສໍາລັບປະຊາຊົນ ແລະ ປ່າໄມ້ , GGCA ແລະ Norad ບໍ່ຈໍາເປັນຕ້ອງຮັບຜິດຊອບຕໍ່ທັດສະນະ ຫຼື ຂໍ້ມູນ ຫຼື ຄວາມເຊື່ອໝັ້ນໃດໆໃນເອກະສານສະບັບນີ້.

# ການສະແດງຄວາມຂອບໃຈ

RECOFTC ຂໍສະແດງຄວາມຂອບໃຈມາຍັງ ອົງການເພື່ອການຮ່ວມມືພັດທະນາຂອງປະເທດນອກແວ (NORAD) ສໍາລັບການສະໜັບສະໜູນດ້ານການເງິນ ແກ່ໂໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ , ແລະ ພັນທະມິດດິນຟ້າອາກາດ ແລະ ບົດບາດຍິງ-ຊາຍໂລກ (GGCA) ສໍາລັບການທົບທວນຄືນການຈັດພິມ ແລະ ການປະກອບຄໍາເຫັນທີ່ມີຄຸນຄ່າກ່ຽວກັບເອກະສານ.

# ຈຸດມຸ້ງໝາຍໃນການຈັດພິມຄັ້ງນີ້

ຈຸດປະສົງຕົ້ນຕໍຂອງປຶ້ມຄູ່ມືຫົວນີ້ ແມ່ນເພື່ອຊ່ວຍຄູຝຶກ ແລະ ຜູ້ອຳນວຍຄວາມສະດວກຢູ່ທ້ອງຖິ່ນ ໃຫ້ມີຄວາມເຂົ້າໃຈຂັ້ນພື້ນຖານກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ +, ໂດຍການສະໜອງ ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບການຄຳນຶງເຖິງວຽກງານບົດບາດຍິງ-ຊາຍ ສຳລັບໂຄງການຝຶກອົບຮົມການພັດທະນາຂີດຄວາມສາມາດທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+.

ປຶ້ມຄູ່ມືສະບັບນີ້ ແມ່ນຜົນຜະລິດຂອງໂຄງການພາກພື້ນຂອງອົງການ RECOFTC ຊື່ວ່າ “ໂຄງການການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານກ່ຽວກັບ ເຣດ+ (ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ; ໄປພ້ອມກັບການອະນຸລັກ ແລະ ການເພີ້ມທະວີການສະສົມທາດກາກບອນປ່າໄມ້; ແລະ ການສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ, REDD+) ຢູ່ພາກພື້ນອາຊີ-ປາຊີຟິກ”. ໃນປີ 2009, RECOFTC ໄດ້ເລີ້ມຈັດຕັ້ງປະຕິບັດໂຄງການຢູ່ປະເທດອິນໂດເນເຊຍ, ສປປ.ລາວ, ເນປານ, ຫວຽດນາມ, ແລະ ນັບຕັ້ງແຕ່ ເດືອນມັງກອນ 2013 ເປັນຕົ້ນມາ ໄດ້ເພີ້ມປະເທດມຽນມາ ເຂົ້າເປັນປະເທດທີ່ຫ້າຂອງໂຄງການ. ຍ້ອນວ່າ ເຣດ+ ແມ່ນກົນໄກທີ່ນຳສະເໜີໂດຍສາກົນ, ແລະ ຜູ້ມີສ່ວນກ່ຽວຂ້ອງຢູ່ຂັ້ນຮາກຖານ ກໍ່ຍັງບໍ່ທັນຮູ້ຈັກກ່ຽວກັບແນວຄວາມຄິດ ຫຼື ພາສາວິຊາການ ທີ່ສະລັບຊັບຊ້ອນກ່ຽວຂ້ອງກັບ ເຣດ+, ຈຸດປະສົງສຳຄັນຂອງ ໂຄງການ ແມ່ນເພື່ອສະໜອງຂໍ້ມູນທີ່ຈຳເປັນກ່ຽວກັບລັກສະນະຕ່າງໆຂອງ ເຣດ+ ເປັນພາສາທີ່ງ່າຍດາຍ ເພື່ອໃຫ້ເຂົ້າໃຈໄດ້ຢ່າງງ່າຍດາຍ ແລະ ໃຫ້ຜູ້ມີສ່ວນກ່ຽວຂ້ອງຢູ່ຂັ້ນຮາກຖານຮູ້ຄຸນຄ່າ ແລະ ຄວາມສຳຄັນ.

ເປົ້າໝາຍ ແມ່ນເພື່ອສະໜອງ ຂໍ້ມູນທີ່ງ່າຍດາຍກ່ຽວກັບສະພາບປັດຈຸບັນ ໃນການເຊື່ອມໂຍງວຽກງານບົດບາດຍິງ-ຊາຍ ເຂົ້າໃນນະໂຍບາຍ, ແຜນການ, ແຜນງານ, ແລະ ພາກປະຕິບັດຕົວຈິງ ທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+, ແຕ່ທ້ອງຖິ່ນຈົນເຖິງລະດັບສາກົນ ໃຫ້ແກ່ຊຸມຊົນຢູ່ຂັ້ນຮາກຖານໄດ້ຮັບຮູ້ ໂດຍກົງ. ໂດຍຜ່ານການເຜີຍແຜ່ຢ່າງກວ້າງຂວາງ, ພວກເຮົາ ມີຈຸດປະສົງເພື່ອຫຼຸດຜ່ອນຊ່ອງຫວ່າງຂໍ້ມູນຂ່າວສານ ລະຫວ່າງ ແລະ ໃນບັນດາຜູ້ອຳນວຍຄວາມສະດວກໃນລະດັບຊຸມຊົນ ແລະ ຜູ້ວາງນະໂຍບາຍລະດັບຊາດ ແລະ ລະດັບພາກພື້ນ, ນັກຄົ້ນຄ້ວາ, ນັກວິຊາການ, ແລະ ຜູ້ປະຕິບັດຕົວຈິງ. ນອກຈາກພາສາລາວແລ້ວ, ຍັງຈະໄດ້ພິມປຶ້ມນີ້ແຈກຢາຍເປັນ ພາສາອັງກິດ, ພາສາບາຮາຊາຂອງອິນໂດເນເຊຍ, ພາສາຫວຽດນາມ ແລະ ພາສາມຽນມາ ຕື່ມອີກ.

# ໂຄງສ້າງຂອງປື້ມຄູ່ມື

ປື້ມຄູ່ມື ປະກອບດ້ວຍຊຸດ 10 ຄຳຖາມ ກ່ຽວກັບລັກສະນະຕ່າງໆຂອງບົດບາດຍິງ-ຊາຍ ໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ແລະ ຄຳຕອບ. ຄຳຖາມ ໄດ້ຖືກຄັດເລືອກ ໂດຍອີງຕາມການປຶກສາຫາລືຢ່າງຕໍ່ເນື່ອງກ່ຽວກັບການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນຂະບວນການປູກຈິດສຳນຶກ ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ໃນບັນດາປະເທດເປົ້າໝາຍຂອງໂຄງການ. ປື້ມຄູ່ມື ມີຈຸດປະສົງ ເພື່ອຕອບສະໜອງຄວາມຕ້ອງການໃນການພັດທະນາຂີດຄວາມສາມາດ ຢູ່ຂັ້ນຮາກຖານ, ໂດຍການຕອບຄຳຖາມທີ່ສຳມະນາກອນ ມັກຖາມເລື້ອຍໆ ໃນເວລາໂຄງການມີກອງປະຊຸມຝຶກອົບຮົມ. ຄຳຖາມທີ່ຄັດເລືອກ ໄດ້ຈັດເປັນ 4 ພາກ ດັ່ງຕໍ່ໄປນີ້:

- **ພາກທີ 1:** ພາກຄວາມຮູ້ພື້ນຖານ ສ້າງຄວາມເຂົ້າໃຈພື້ນຖານກ່ຽວກັບບົດບາດຍິງ-ຊາຍ ໃຫ້ແກ່ຜູ້ທີ່ມີສ່ວນກ່ຽວຂ້ອງຢູ່ຂັ້ນຮາກຖານ ໂດຍການນິຍາມບົດບາດຍິງ-ຊາຍ, ການເຊື່ອມບົດບາດຍິງ-ຊາຍ, ຄວາມສະເໝີພາບ, ແລະ ຄວາມທ່ຽງທຳລະຫວ່າງ ຍິງ-ຊາຍ ໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+.

- **ພາກທີ 2:** ພາກການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ອະທິບາຍເຫດຜົນສຳລັບການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນການພັດທະນາຂີດຄວາມສາມາດກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+, ແລະ ປະເດັນສຳຄັນຊຶ່ງເຫັນວ່າຈຳເປັນທີ່ຈະຕ້ອງໄດ້ບັນລຸ.

- **ພາກທີ 3:** ພາກແຜນການ ແລະ ນະໂຍບາຍ ໃຫ້ພາບລວມກ່ຽວກັບນະໂຍບາຍ ແລະ ໂຄງການລິເລີ່ມຂອງສະຖາບັນທີ່ມີຢູ່ແລ້ວ ຊຶ່ງແນໃສ່ເພື່ອສົ່ງເສີມຄວາມສະເໝີພາບ ລະຫວ່າງ ຍິງ ແລະ ຊາຍ ຢູ່ໃນລະດັບສາກົນ. ຈະມີເອກະສານອ້າງອີງສະເພາະ ທີ່ກ່າວເຖິງການປຶກສາຫາລືລະດັບຊາດໃນປັດຈຸບັນ ກ່ຽວກັບ ເຣດ + ແລະ ການປ່ຽນແປງດິນຟ້າອາກາດ, ໃນບັນດາປະເທດເປົ້າໝາຍຂອງໂຄງການ.

- **ພາກທີ 4:** ພາກການພັດທະນາຂີດຄວາມສາມາດ ໃຫ້ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກທ້ອງຖິ່ນ ເພື່ອດຳເນີນການຝຶກອົບຮົມໂດຍສະເພາະ ກ່ຽວກັບບົດບາດຍິງ-ຊາຍ ຢູ່ຂັ້ນຮາກຖານ. ນອກຈາກນັ້ນ, ຍັງຈະໄດ້ແລກປ່ຽນ ບົດສະຫຼຸບຫຍໍ້ກ່ຽວກັບວິທີການຕ່ຽງກຽງານບົດບາດຍິງ-ຊາຍ ຂອງໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ໃນຮູບແບບຂອງໂຄງການ.

# ສິບຄຳຖາມຕົ້ນຕໍ





## ພາກທີ 1: ຄວາມຮູ້ພື້ນຖານ

**ຄຳຖາມທີ່ 1**

ບົດບາດຍິງ-ຊາຍ ແລະ ການເຊື່ອມບົດບາດຍິງ-ຊາຍ ໝາຍເຖິງຫຍັງ?

**ຄຳຖາມທີ່ 2**

ຜູ້ຊາຍ ແລະ ແມ່ຍິງ ໄດ້ຮັບ ຜົນກະທົບແຕກຕ່າງກັນແນວໃດ ຈາກການປ່ຽນແປງດິນຟ້າອາກາດ?

**ຄຳຖາມທີ່ 3**

ເປັນຫຍັງ ແມ່ຍິງຈຶ່ງມີຄວາມສ່ຽງ ຫຼາຍກວ່າ ຈາກຜົນກະທົບຂອງ ການປ່ຽນແປງດິນຟ້າອາກາດ?

## ພາກທີ 2: ການປ່ຽນແປງດິນຟ້າອາກາດ ແລະ ເຣດ+

**ຄຳຖາມທີ່ 4**

ເປັນຫຍັງຈຶ່ງຈຳເປັນຕ້ອງເຊື່ອມ ວຽກງານບົດບາດຍິງ-ຊາຍ ເຂົ້າໃນການປ່ຽນແປງດິນຟ້າ ອາກາດ ແລະ ເຣດ+?

**ຄຳຖາມທີ່ 5**

ປະເດັນສຳຄັນກ່ຽວກັບບົດບາດ ຍິງ-ຊາຍ ເພື່ອສົ່ງເສີມພາລະ ບົດບາດຂອງຜູ້ຊາຍ ແລະ ແມ່ຍິງ ຢູ່ຂັ້ນຮາກຖານ ໃນການປ່ຽນແປງ ດິນຟ້າອາກາດ ແລະ ເຣດ+ ໃຫ້ເຂັ້ມແຂງຂຶ້ນ ມີຫຍັງແດ່?





## ພາກທີ 3: ບັນດາແຜນການ ແລະ ນະໂຍບາຍ

**ຄຳຖາມທີ 6**

ມີເຄື່ອງມື ນະໂຍບາຍ ແລະ ກອບວຽກໃດແດ່ ຢູ່ໃນລະດັບສາກົນ ເພື່ອສົ່ງເສີມສິດທິມະນຸດ ແລະ ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ?

**ຄຳຖາມທີ 7**

ມີໂຄງການລິເລີ່ມໃດແດ່ ທີ່ປະຕິບັດຢູ່ໃນລະດັບສາກົນ ເພື່ອສົ່ງເສີມການເຊື່ອມວຽກງານບົດບາດຍິງ-ຊາຍ ເຂົ້າໃນກອງປະຊຸມປຶກສາຫາລື ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+?

**ຄຳຖາມທີ 8**

ແຜນການ ແລະ ນະໂຍບາຍ ແຫ່ງຊາດກ່ຽວກັບການປ່ຽນແປງ ດິນຟ້າອາກາດ, ເຣດ+, ແລະ ບົດບາດຍິງ-ຊາຍ ຢູ່ໃນບັນດາ ປະເທດຂອງໂຄງການສ້າງ ຄວາມອາດສາມາດໃຫ້ແກ່ຂັ້ນ ຮາກຖານສຳລັບ ເຣດ+ ມີຫຍັງແດ່?

## ພາກທີ 4: ການພັດທະນາຂີດຄວາມສາມາດ

**ຄຳຖາມທີ 9**

ປະເດັນສຳຄັນກ່ຽວກັບວຽກງານ ບົດບາດຍິງ-ຊາຍທີ່ຈະຕ້ອງໄດ້ ເອົາໃຈໃສ່ໃນເວລາດຳເນີນກິດຈະກຳ ປູກຈິດສຳນຶກ ຢູ່ຂັ້ນຮາກຖານ ກ່ຽວກັບ ເຣດ+ ມີຫຍັງແດ່?

**ຄຳຖາມທີ 10**

ໂຄງການສ້າງຄວາມອາດສາມາດ ໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ໄດ້ສົ່ງເສີມການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນການພັດທະນາຂີດຄວາມສາມາດ ກ່ຽວກັບວຽກງານ ເຣດ+ ຄືແນວໃດ?



# ພາກທີ 1: ຄວາມຮູ້ພື້ນຖານ

# ຄຳຖາມທີ 1:

## ບົດບາດຍິງ-ຊາຍ ແລະ ການເຊື່ອມບົດບາດຍິງ-ຊາຍ ໝາຍເຖິງຫຍັງ?

ບົດບາດຍິງ-ຊາຍ (Gender) ສາມາດນິຍາມໄດ້ວ່າ ເປັນຊຸດຂອງບັນດາຄຸນລັກສະນະ, ບົດບາດ, ຄວາມຮັບຜິດຊອບ, ແລະ ພຶດຕິກຳ ທີ່ສ້າງຂຶ້ນໂດຍສັງຄົມ ແລະ ວັດທະນະທຳ ຊຶ່ງເຮັດໃຫ້ເຫັນຄວາມແຕກຕ່າງ ລະຫວ່າງ ຊາຍ ແລະ ຍິງ. ບົດບາດຍິງ-ຊາຍ ບໍ່ຄືກັນກັບເພດ. ເພດ ກຳນົດຂຶ້ນໂດຍທາງຊີວະສາດ ແລະ ເປັນພຽງລັກສະນະໜຶ່ງຂອງບົດບາດຍິງ-ຊາຍ ຂອງຄົນເທົ່ານັ້ນ. ບັນດາພຶດຕິກຳ ແລະ ທັດສະນະຄະຕິຂອງບົດບາດຍິງ-ຊາຍ ແມ່ນຮຽນຮູ້ໄດ້ ຫຼື ຊອກຮູ້ໄດ້; ບໍ່ຕາຍຕົວ ແລະ ກໍ່ບໍ່ມີທົ່ວໄປ.

"*ການເຊື່ອມ (Mainstreaming)*" ໝາຍເຖິງການນຳເອົາສິ່ງທີ່ ຫຼື ຜູ້ທີ່ເຫັນວ່າ ຖືກກີດກັ້ນໂອກາດ ຫຼື ຖືກຈຳກັດເຂົ້າໃນຂະບວນການຕັດສິນໃຈທີ່ສຳຄັນ.

ໃນວຽກງານດັ່ງກ່າວນີ້, *ການເຊື່ອມບົດບາດຍິງ-ຊາຍ (Gender mainstreaming)* ສາມາດນິຍາມວ່າເປັນຂະບວນການເຊື່ອມທັດສະນະ ແລະ ບົດບາດຂອງທັງ ຊາຍ ແລະ ຍິງ ເຂົ້າມາເປັນສ່ວນໜຶ່ງໃນການອອກແບບ, ການປະຕິບັດ, ການຕິດຕາມ ແລະ ປະເມີນຜົນບັນດາແຜນການ, ນະໂຍບາຍ ແລະ ແຜນງານ, ເພື່ອໃຫ້ທັງຜູ້ຊາຍ ແລະ ແມ່ຍິງສາມາດມີສ່ວນພົວພັນຢ່າງເທົ່າທຽມ ແລະ ໄດ້ຮັບຜົນປະໂຫຍດຢ່າງທ່ຽງທຳ.

ດັ່ງນັ້ນ, ການເຊື່ອມບົດບາດຍິງ-ຊາຍ ແມ່ນນອກເໜືອກວ່າ ພຽງແຕ່ເພີ້ມການມີສ່ວນຮ່ວມຂອງແມ່ຍິງເທົ່ານັ້ນ - ໝາຍເຖິງການຮັບຮູ້ ແລະ ການເຊື່ອມໂຍງປະສົບການ, ຄວາມຮູ້, ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ຜູ້ຊາຍເຂົ້າໃນຂະບວນການຕັດສິນໃຈ. ໃນວຽກງານການພັດທະນາ, ໝາຍເຖິງການກຳນົດ ແລະ ນຳໃຊ້ສ່ວນປະກອບບົດບາດຍິງ-ຊາຍ ເຂົ້າໃນເປົ້າໝາຍ, ຍຸດທະສາດ, ແລະ ການປະຕິບັດໂຄງການພັດທະນາ, ເພື່ອວ່າ ທັງແມ່ຍິງ ແລະຜູ້ຊາຍ ສາມາດມີອິດທິພົນຕໍ່, ມີສ່ວນຮ່ວມ, ແລະ ຮັບຜົນປະໂຫຍດຈາກຂະບວນການພັດທະນາ (ເບິ່ງກ່ອງທີ1).

ດັ່ງນັ້ນ, ເປົ້າໝາຍສຸດທ້າຍຂອງການເຊື່ອມບົດບາດຍິງ-ຊາຍ ແມ່ນເພື່ອເຮັດໃຫ້ເກີດການປ່ຽນແປງພັດທະນາໃນໂຄງສ້າງທາງສັງຄົມ ແລະ ສະຖາບັນ ເພື່ອໃຫ້ສັງຄົມບ່ອນທີ່ມີຜົນປະໂຫຍດ ແລະ ຂະບວນການຕັດສິນໃຈບໍ່ມີການຈຳແນກຕໍ່ເພດໃດໜຶ່ງ.

ບັນດາຄຳສັບອື່ນໆທີ່ມັກນຳໃຊ້ເລື້ອຍໆໃນຂະແໜງການພັດທະນາ ແມ່ນ "*ຄວາມທ່ຽງທຳລະຫວ່າງບົດບາດຍິງ-ຊາຍ (Gender Equity)ແລະ ຄວາມສະເໝີພາບລະຫວ່າງ ບົດບາດຍິງ-ຊາຍ (Gender Equality)*". ຄວາມທ່ຽງທຳໃນບົດບາດຍິງ-ຊາຍ ແມ່ນຂະບວນການຂອງຄວາມເປັນທຳ ຫຼື ການບໍ່ລຳອຽງເຂົ້າຂ້າງຝ່າຍຍິງ ຫຼື ຊາຍ, ແລະ ສາມາດກຳນົດເປັນເຄື່ອງມືເພື່ອບັນລຸຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ. ເວົ້າອີກແບບໜຶ່ງ, ຄວາມທ່ຽງທຳແມ່ນພາຫະນະ, ໃນຂະນະທີ່ ຄວາມສະເໝີພາບ ແມ່ນຜົນໄດ້ຮັບຈາກຂະບວນການຂອງຄວາມທ່ຽງທຳ. ດັ່ງນັ້ນ ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ໝາຍເຖິງ ຜູ້ຊາຍ ແລະ ແມ່ຍິງ ມີສິດທິ ແລະ ຄວາມຮັບຜິດຊອບທີ່ເທົ່າທຽມກັນໃນສັງຄົມ, ຄຽງຄູ່ກັບການເຂົ້າເຖິງພາຫະນະ (ຊັບພະຍາກອນ, ໂອກາດ) ຢ່າງເທົ່າທຽມ ແລະ ນຳໃຊ້ໃຫ້ເໝາະສົມ. ຢູ່ບ່ອນທີ່ມີຄວາມບໍ່ສະເໝີພາບລະຫວ່າງຍິງ ແລະ ຊາຍ, ໂດຍທົ່ວໄປແລ້ວ ແມ່ຍິງຈະຖືກກີດກັ້ນ ຫຼື ດ້ອຍໂອກາດ ໃນການຕັດສິນໃຈ ແລະ ເຂົ້າເຖິງຊັບພະຍາກອນທາງເສດຖະກິດ ແລະ ສັງຄົມ.



**ກ່ອງທີ 1: ນິຍາມ ແລະ ບັນດາຫຼັກການພື້ນຖານກ່ຽວກັບການເຊື່ອມບົດບາດຍິງ-ຊາຍ ໃນເດືອນ ກໍລະກົດ 1997, ຄະນະກຳມະການດ້ານເສດຖະກິດ ແລະ ສັງຄົມຂອງສະຫະປະຊາຊາດ (ECOSOC) ໄດ້ ກຳນົດແນວຄວາມຄິດກ່ຽວກັບການເຊື່ອມບົດບາດຍິງ-ຊາຍ ດັ່ງຕໍ່ໄປນີ້:**

*"ການເຊື່ອມທັດສະນະກ່ຽວກັບບົດບາດຍິງ-ຊາຍ ແມ່ນຂະບວນການປະເມີນຜົນການພົວພັນຕໍ່ແມ່ຍິງ ແລະ ຜູ້ຊາຍ ໃນການປະຕິບັດແຜນການເຄື່ອນໄຫວທີ່ໄດ້ວາງໄວ້, ລວມທັງນິຕິກຳ, ນະໂຍບາຍ ຫຼື ແຜນງານ, ໃນຂົງເຂດໃດໜຶ່ງ ແລະ ໃນທຸກລະດັບ. ມັນເປັນຍຸດທະສາດສຳລັບເຮັດໃຫ້ຄວາມກ່ຽວຂ້ອງ ແລະ ປະສົບການຂອງແມ່ຍິງ ເຊັ່ນດຽວກັນກັບ ຜູ້ຊາຍ ລວມເຂົ້າມາເປັນສ່ວນໜຶ່ງຂອງການອອກແແບບ, ການປະຕິບັດ, ການຕິດຕາມ ແລະ ປະເມີນຜົນກ່ຽວກັບນະໂຍບາຍ ແລະ ແຜນງານ ໃນທົ່ວຂົງເຂດທາງດ້ານການເມືອງ, ເສດຖະກິດ, ແລະ ສັງຄົມ, ເພື່ອໃຫ້ແມ່ຍິງ ແລະ ຜູ້ຊາຍ ໄດ້ຮັບຜົນ ປະໂຫຍດທີ່ເທົ່າທຽມກັນ ແລະ ຄວາມບໍ່ເທົ່າທຽມບໍ່ມີຕໍ່ໄປ. ເປົ້າໝາຍສຸດທ້າຍ ໃນການເຊື່ອມບົດບາດຍິງຊາຍ ແມ່ນເພື່ອ ໃຫ້ມີຄວາມເທົ່າທຽມກັນລະຫວ່າງ ຍິງ-ຊາຍ."*

ຫຼັກການພື້ນຖານຂອງການເຊື່ອມບົດບາດຍິງ-ຊາຍ: ການເຊື່ອມບົດບາດຍິງ-ຊາຍ ຕາມແຜນການພັດທະນາ ຕ້ອງໄດ້ ປະຕິບັດຕາມບາງຫຼັກການ ພື້ນຖານ ດັ່ງລຸ່ມນີ້:

- ຈຳເປັນຕ້ອງໄດ້ສ້າງກົນໄກຮັບຜິດຊອບທີ່ເໝາະສົມ ເພື່ອຕິດຕາມຄວາມຄືບໜ້າ.
- ຄວນມີການກຳນົດປະເດັນ ແລະ ບັນຫາເບື້ອງຕົ້ນໃນທົ່ວທຸກຂົງເຂດກິດຈະກຳ ເຊັ່ນ ຄວນວິເຄາະຄວາມແຕກຕ່າງ ແລະ ຄວາມບໍ່ເທົ່າທຽມລະຫວ່າງ ຍິງ-ຊາຍ.
- ໃນທັດສະນະຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ບໍ່ຄວນຈະມີສົມມຸດຕິຖານທີ່ວ່າ ປະເດັນ ຫຼື ບັນຫາ ມີຄວາມເປັນກາງ.
- ຄວນດຳເນີນການວິເຄາະບົດບາດຍິງ-ຊາຍ ເລື້ອຍໆ.
- ມີທັດສະນະດ້ານການເມືອງທີ່ຈະແຈ້ງ ແລະ ຈັດສັນຊັບພະຍາກອນໃຫ້ພຽງພໍ ສຳລັບການເຊື່ອມບົດບາດ ຍິງ-ຊາຍ, ລວມທັງເງິນ ແລະ ຊັບພະຍາກອນມະນຸດ ເພີ້ມ ຖ້າເຫັນວ່າຈຳເປັນ, ຊຶ່ງມີຄວາມສຳຄັນສຳລັບ ຜັນຂະຫຍາຍແນວຄວາມຄິດໄປຈັດຕັ້ງປະຕິບັດ.
- ການເຊື່ອມບົດບາດຍິງ-ຊາຍ ຮຽກຮ້ອງໃຫ້ພະຍາຍາມ ເພື່ອເປີດກວ້າງໃຫ້ແມ່ຍິງມີສ່ວນຮ່ວມຢ່າງເທົ່າທຽມ ໃນການຕັດສິນໃຈ ຢູ່ໃນທຸກໆລະດັບ.
- ການເຊື່ອມ ບໍ່ໄດ້ປ່ຽນແທນຄວາມຕ້ອງການສຳລັບເປົ້າໝາຍ, ນະໂຍບາຍ ແລະ ແຜນງານສະເພາະ ສຳລັບແມ່ຍິງ, ແລະ ນິຕິກຳທີ່ເຊື່ອຖືໄດ້, ຫຼື ບໍ່ໄດ້ລະເລີຍຄວາມຕ້ອງການສຳລັບໜ່ວຍງານ ຫລື ປະສານງານ ບົດບາດຍິງ-ຊາຍ.

ແຫຼ່ງຂໍ້ມູນ: United Nations Economic and Social Council 1997, Annual Report. USA: United Nations

# ຄຳຖາມທີ 2:

## ຜູ້ຊາຍ ແລະ ແມ່ຍິງ ໄດ້ຮັບຜົນກະທົບແຕກຕ່າງກັນແນວໃດ ຈາກການປ່ຽນແປງດິນຟ້າອາກາດ?

ການປ່ຽນແປງດິນຟ້າອາກາດ ມີຜົນກະທົບຕໍ່ທຸກຄົນ ໂດຍບໍ່ຄຳນຶງເຖິງຊັ້ນວັນນະ, ຊົນເຜົ່າ, ເຊື້ອຊາດ, ຊົນຊັ້ນ, ຫຼື ເພດ; ເຖິງຢ່າງໃດກໍ່ຕາມ, ຜົນກະທົບຂອງມັນ ໄດ້ກະຈາຍແຕກຕ່າງກັນໄປ. ແມ່ຍິງ ຊຶ່ງກວມເອົາລວມ 70% ຂອງຈຳນວນປະຊາກອນທັງໝົດ 1, 3 ໂກດຄົນ ທີ່ດຳລົງຊີວິດຢູ່ໃນຄວາມທຸກຍາກທີ່ສຸດໃນທົ່ວໂລກ[1], ທີ່ເພິ່ງພາອາໄສຊັບພະຍາກອນທຳມະຊາດຂ້ອນຂ້າງສູງເພື່ອດຳລົງຊີວິດລ້ຽງຊີບ. ດັ່ງນັ້ນ, ແມ່ຍິງມັກຈະມີຄວາມສ່ຽງສູງຕໍ່ຜົນກະທົບຈາກການປ່ຽນແປງດິນຟ້າອາກາດທີ່ກໍ່ໃຫ້ເກີດໄພພິບັດທາງທຳມະຊາດ.

ແມ່ຍິງ ແລະ ຜູ້ຊາຍຊົນນະບົດ ມີພາລະບົດບາດ, ສິດທິ ແລະ ຄວາມຮັບຜິດຊອບສະເພາະ ທີ່ກຳນົດການເຂົ້າເຖິງ ແລະ ນຳໃຊ້ຊັບພະຍາກອນ, ຊຶ່ງອະທິບາຍຄວາມດ້ອຍໂອກາດ ແລະ ອຳນາດໃນການຕັດສິນໃຈຂອງແມ່ຍິງ ແລະ ຜູ້ຊາຍ ທີ່ແຕກຕ່າງກັນ. ຄວາມດ້ອຍໂອກາດ ໂດຍສະເພາະຂອງແມ່ຍິງຊົນນະບົດແມ່ນຍິ່ງແຮງຮ້າຍກວ່າການເລືອກປະຕິບັດ ແລະ ການລຳອຽງໃນສັງຄົມ.

ຄວາມຮູ້, ທັກສະ, ແລະ ການນຳໃຊ້ຊັບພະຍາກອນປ່າໄມ້ຂອງແມ່ຍິງ ແທດເໝາະກັບປະສົບການຕ່າງກັນຂອງພວກເຂົາເຈົ້າ (ເບິ່ງກ່ອງທີ 2). ແມ່ຍິງ ມັກຈະມີຄວາມຮູ້ສະເພາະດ້ານກ່ຽວກັບຕົ້ນໄມ້ ແລະ ປ່າໄມ້ ທາງດ້ານຄວາມຫຼາກຫຼາຍຂອງພັນໄມ້, ການຄຸ້ມຄອງ ແລະ ການນຳໃຊ້ເພື່ອຈຸດປະສົງຕ່າງໆ, ເຊັ່ນດຽວກັບວິທີການອະນຸລັກ. ເມື່ອສົມທຽບໃສ່ຜູ້ຊາຍແລ້ວ, ຄວາມຮູ້ຂອງແມ່ຍິງມີແນວໂນ້ມທີ່ຈະກ່ຽວພັນໂດຍກົງກັບການບໍລິໂພກອາຫານໃນຄົວເຮືອນ ແລະ ສຸຂະພາບ ຫລາຍກວ່າ, ຊຶ່ງເປັນສິ່ງທີ່ສຳຄັນຍິ່ງ ໂດຍສະເພາະໃນຊ່ວງວິກິດການທາງດ້ານອາຫານ.

ໃນທຳນອງດຽວກັນ, ຄວາມແຕກຕ່າງລະຫວ່າງຊາຍ ແລະ ຍິງ ໃນການນຳໃຊ້ ແລະ ຄວາມຮູ້ກ່ຽວກັບຊັບພະຍາກອນປ່າໄມ້ ມັກກຳນົດສະຖານະທາງດ້ານເສດຖະກິດ-ສັງຄົມຂອງພວກເຂົາເຈົ້າໃນສັງຄົມ, ແລະ ແທດເໝາະກັບຄວາມສາມາດໃນການເຄື່ອນໄຫວລະຫວ່າງພວກເຂົາເຈົ້າ. ສະນັ້ນ, ຜົນທີ່ຕາມມາໃນ ການປ່ຽນແປງດິນຟ້າອາກາດ, ບໍ່ພຽງແຕ່ເຮັດໃຫ້ໂອກາດທີ່ມີແຕກຕ່າງກັນລະຫວ່າງຜູ້ຊາຍ ແລະ ແມ່ຍິງເທົ່ານັ້ນ, ແຕ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ກໍ່ສາມາດປ່ຽນແປງໄດ້ ຂຶ້ນຢູ່ກັບການເຄື່ອນໄຫວທີ່ໃຫ້ແກ່ບົດບາດຍິງ-ຊາຍຄືກັນ.

---

[1] United Nations Development Programme. (1995). Human development report 1995. New York: OUP



### ກ່ອງທີ 2: ຄວາມແຕກຕ່າງໃນຄວາມມັກພັນໄມ້ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ໃນພາກພື້ນອາຊີ-ປາຊີຟິກ

ໂດຍທົ່ວໄປແລ້ວ, ແມ່ຍິງໃນພາກພື້ນອາຊີ-ປາຊີຟິກ ມັກພັນໄມ້ທີ່ນຳໃຊ້ໄດ້ຫຼາຍຈຸດປະສົງ, ຊຶ່ງອາດປະຕິບັດຫຼາຍບົດບາດແຕກຕ່າງກັນ ລວມທັງການນຳເອົາມາປະກອບເປັນເຊື້ອໄຟໃນຄົວເຮືອນ, ຫຍ້າລ້ຽງສັດ, ການຄ້ຳປະກັນທາງດ້ານສະບຽງອາຫານ. ແທນທີ່ຈະສຸມໃສ່ແຕ່ໄມ້ທ່ອນ ພວກເຂົາເຈົ້າ ນິຍົມຕົ້ນໄມ້ທີ່ມີກິ່ງງ່າຫຼາຍ ແລະ ປະເພດຕົ້ນໄມ້ທີ່ສາມາດຮັບໃຊ້ເປັນເຄື່ອງຕ້ານລົມ. ເນື່ອງຈາກ ການເຂົ້າຮ່ວມຂອງພວກເຂົາເຈົ້າໃນການຂາຍ ແລະ ການປຸງແຕ່ງໄມ້ທ່ອນ ມີຈຳກັດ, ແມ່ຍິງຈະເລືອກເອົາຕົ້ນໄມ້ ເຊັ່ນ: ຕົ້ນກະເດົາ, ຕົ້ນໝາກຂາມ, ຊະນິດທີ່ມີຄວາມສຳຄັນຄ້າຍກັບຢາ, ແລະ ເຄື່ອງປ່າຂອງດົງ ອື່ນໆ (ໝາກໄມ້, ໝາກກໍ່,ໄມ້ທີ່ມີຢາງ (ຂີ້ຊີ), ໄມ້ທີ່ໃຫ້ນ້ຳຢາງ (ນ້ຳກ້ຽງ) , ແລະ ນ້ຳເຜີ້ງ) ຊຶ່ງພວກເຂົາເຈົ້າ ສາມາດປຸງແຕ່ງ ຫຼື ຄ້າຂາຍໄດ້. ເຖິງຢ່າງໃດກໍ່ຕາມ, ຜູ້ຊາຍຢູ່ໃນພາກພື້ນ ມີແນວໂນ້ມທີ່ຈະມັກພັນໄມ້ທີ່ມີມູນຄ່າສູງ ເຊັ່ນ: ໄມ້ຕະກຸນໄມ້ເພີາ, ໄມ້ອີກ, ໄມ້ແປກ, ໄມ້ສັກ, ໄມ້ກະຖິນນະລົງ, ແລະ ໄມ້ຊໍ້ ຊຶ່ງອາດມີໂອກາດໃນການເຂົ້າເຖິງ ແລະ ຄວາມຮູ້ກ່ຽວກັບຕະຫຼາດໃກ້ຄຽງ, ເພື່ອຄ້າຂາຍໄມ້ທ່ອນ.

ແຫຼ່ງຂໍ້ມູນ: REDD-Net Bulletin, Asia-Pacific, Issue 04 - May 2011

# ຄຳຖາມທີ 3:

## ເປັນຫຍັງ ແມ່ຍິງຈຶ່ງມີຄວາມສ່ຽງຫຼາຍກວ່າ ຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດ?

ການວິໄຈ ສະແດງໃຫ້ເຫັນວ່າ ແມ່ຍິງມັກຈະໄດ້ຮັບຜົນກະທົບທີ່ຮ້າຍແຮງກວ່າຜູ້ຊາຍ ຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ. ດັ່ງທີ່ໄດ້ກ່າວມາຢູ່ໃນການຕອບຄຳຖາມທີ 2, ການເລືອກປະຕິບັດທາງດ້ານສັງຄົມ-ວັດທະນະທຳ, ເຮັດໃຫ້ເກີດຄວາມທຸກຍາກຫລາຍຂຶ້ນໃນບັນດາແມ່ຍິງ, ແລະ ການຈຳກັດໃນການເຂົ້າເຖິງສິດທິພື້ນຖານ ເປັນປັດໄຈທີ່ເຮັດໃຫ້ຄວາມດ້ອຍໂອກາດຂອງແມ່ຍິງເພີ້ມສູງຂຶ້ນ. ໃນການເກີດໄພພິບັດທາງທຳມະຊາດໃນຊຸມປີທີ່ຜ່ານມາ, ທັງຢູ່ໃນປະເທດກຳລັງພັດທະນາ ແລະ ປະເທດທີ່ພັດທະນາແລ້ວ, ພົບວ່າ ຜູ້ທີ່ທຸກທໍລະມານຫຼາຍທີ່ສຸດ ຕົ້ນຕໍແມ່ນຄົນທຸກຈົນ (ເບິ່ງກ່ອງທີ 3). ເກີນກວ່າ 70% ຂອງຄົນທຸກຈົນໃນໂລກແມ່ນແມ່ຍິງ.

**ກ່ອງທີ 3: ຜົນກະທົບຂອງໄພພິບັດທາງທຳມະຊາດຕໍ່ແມ່ຍິງ: ກໍລະນີ ຂອງຊຶນາມິ ປີ 2004**

ບົດລາຍງານຂອງອົງການອອກຟາມ (ເດືອນມີນາ 2005) ກ່ຽວກັບຜົນກະທົບໃນການເຕືອນໄພ ຊຶນາມິ ອາຊີ ປີ 2004 ທີ່ໄດ້ຍົກໃຫ້ເຫັນເຖິງ ຄວາມບໍ່ສົມດູນຂອງບົດບາດຍິງ-ຊາຍ, ເພາະວ່າຈຳນວນສ່ວນໃຫຍ່ຂອງຜູ້ທີ່ຕາຍ ແລະ ສ່ວນໜ້ອຍຂອງຜູ້ທີ່ຟື້ນຄືນ ແມ່ນແມ່ຍິງ. ຍົກຕົວຢ່າງ ໃນລັດອາເຈະ ຂອງປະເທດອິນໂດເນເຊຍ, ເກີນກວ່າ 75% ຂອງຜູ້ທີ່ຕາຍ ແມ່ນແມ່ຍິງ, ໃນອັດຕາສ່ວນ ຜູ້ລອດຊີວິດ ຊາຍ-ຍິງ 3:1. ຍ້ອນວ່າ ແມ່ຈຳນວນຫຼວງຫຼາຍໄດ້ເສຍຊີວິດ, ຈຶ່ງໄດ້ມີຜົນສະທ້ອນທີ່ສຳຄັນຕໍ່ອັດຕາການຕາຍຂອງເດັກ, ການແຕ່ງງານກ່ອນໄວຂອງເດັກຍິງ, ການປ່ອຍປະລະເລີຍການສຶກສາຂອງເດັກຍິງ, ການລ່ວງລະເມີດທາງເພດ, ການຄ້າມະນຸດໃນກຸ່ມແມ່ຍິງ, ແລະ ໂສເພນີ.

ຍ້ອນສະພາບທີ່ຖືກກີດກັ້ນໂອກາດ ແລະ ການເພິ່ງພາອາໄສຊັບພະຍາກອນທຳມະຊາດໃນທ້ອງຖິ່ນຂອງແມ່ຍິງ, ພາລະພາຍໃນເຮືອນຂອງພວກເຂົາເຈົ້າ ໄດ້ເພີ້ມຂື້ນ. ໃນຄວາມເປັນຈິງແລ້ວ, ແມ່ຍິງມີຊີວິດທີ່ທຸກຍາກໃນປະເທດກຳລັງພັດທະນາ ມີພາລະທີ່ບໍ່ເທົ່າທຽມກັນ ເມື່ອໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ຍົກຕົວຢ່າງ, ແມ່ຍິງເຮັດວຽກຄົວເຮືອນຫຼາຍຂຶ້ນ, ແລະ ຍ່າງໄປໄກກວ່າເກົ່າ ເພື່ອໄປຕັກນ້ຳ ຫຼື ເອົາຟືນ, ຫຍ້າລ້ຽງສັດ, ພືດທີ່ກິນໄດ້, ແລະ ເປັນຢາ ຈາກປ່າໄມ້ອ້ອມຂ້າງ. ພາລະພາຍໃນເຮືອນທີ່ເພີ້ມຂື້ນ ເຮັດໃຫ້ແມ່ຍິງບໍ່ໄດ້ພັກຜ່ອນຢ່າງພຽງພໍ, ຊຶ່ງອາດຈະມີຜົນກະທົບທາງລົບຕໍ່ສຸຂະພາບຂອງພວກເຂົາເຈົ້າ. ໃນບາງເຂດ, ການປ່ຽນແປງດິນຟ້າອາກາດ ອາດເຮັດໃຫ້ເກີດການຂາດແຄນຊັບພະຍາກອນ ແລະ ຕະຫຼາດແຮງງານ ທີ່ບໍ່ແນ່ນອນ, ເຮັດໃຫ້ຜູ້ຊາຍຕ້ອງຍ້າຍໄປຊອກຫາວຽກເຮັດງານທຳຢູ່ບ່ອນອື່ນ ຊຶ່ງປະໃຫ້ແມ່ຍິງຕ້ອງໄດ້ຮັບຜິດຊອບວຽກຄົວເຮືອນ ແລະປູກຝັງເພີ້ມຂຶ້ນຕື່ມອີກ (ເບິ່ງກ່ອງທີ 4).

ນອກຈາກນີ້, ການຂາດການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນທຳມະຊາດ, ຄວາມຮູ້ໃໝ່, ເຕັກໂນໂລຊີ, ແລະ ການປ່ອຍສິນເຊື່ອດ້ານການເງິນສຳລັບແມ່ຍິງ, ໝາຍຄວາມວ່າ ພວກເຂົາເຈົ້າ ມີຊັບພະຍາກອນໜ້ອຍລົງເພື່ອຮັບມືກັບການປ່ຽນແປງດິນຟ້າອາກາດຕາມລະດູການ ແລະ ແຕ່ລະໄລຍະ ແລະ ໄພພິບັດທາງທຳມະຊາດ. ດັ່ງນັ້ນ, ຈຶ່ງໄດ້ສົ່ງເສີມພາລະບົດບາດຕາມຮີດຄອງປະເພນີ ໃຫ້ເຂັ້ມແຂງຂື້ນ ແລະ ຄວາມສາມາດຂອງແມ່ຍິງທີ່ຈະຂະຫຍາຍກິດຈະການໃນການດຳລົງຊີວິດໃຫ້ມີຄວາມຫລາກຫລາຍ (ໂດຍສະເພາະ ຂີດຄວາມສາມາດຂອງພວກເຂົາເຈົ້າ ເພື່ອເຂົ້າເຖິງວຽກເຮັດງານທຳທີ່ສ້າງລາຍໄດ້) ກໍ່ເລີ້ມຫຼຸດລົງ.

**ກ່ອງທີ 4: ການເສື່ອມໂຊມຂອງສິ່ງແວດລ້ອມ-ສາຍເຫດທີ່ເປັນພາລະຂອງແມ່ຍິງໃນປະເທດເນປານ**

ໃນການສຶກສາທີ່ດຳເນີນ ໂດຍ ACTIONAID ໃນປີ 1993-1994 ໃນເຂດ ຮີມາລາຍານຂອງປະເທດເນປານ, ເປັນທີ່ຈະແຈ້ງວ່າ ການເສື່ອມໂຊມຂອງສິ່ງແວດລ້ອມ ໄດ້ສ້າງແຮງກົດດັນຢູ່ພາຍໃນຄົວເຮືອນ ແລະ ຄວາມຫຍຸ້ງຍາກກ່ຽວກັບການຂາດແຄນຊັບພະຍາກອນ. ແນ່ນອນ ມັນເປັນຄວາມກົດດັນຕໍ່ເດັກ, ໂດຍສະເພາະເດັກຍິງ, ທີ່ຈະຕ້ອງໄດ້ເຮັດວຽກຫຼາຍຂຶ້ນ ແລະ ເດັກທີ່ເຮັດວຽກຕັ້ງແຕ່ອາຍຸເຍົາໄວ ກໍ່ມີຈຳນວນເພີ້ມຂື້ນ. ອີງຕາມການສຶກສາຄົ້ນຄວ້າ, ເດັກຍິງ ເຮັດວຽກໜັກທີ່ສຸດ, ມີສິດທິ ແລະ ໂອກາດທາງການສຶກສາໜ້ອຍທີ່ສຸດ. ໂຄງການ ທີ່ເອົາໃຈໃສ່ສະເພາະແຕ່ສົ່ງເດັກຍິງໄປໂຮງຮຽນໃຫ້ໄດ້ຫຼາຍຂຶ້ນ ບໍ່ປະສົບຜົນສຳເລັດ ຍ້ອນວ່າສະພາບທາງດ້ານສັງຄົມ ແລະ ສິ່ງແວດລ້ອມຂອງຄອບຄົວ ໄດ້ຊຸດໂຊມລົງ.



# ພາກທີ 2: ການປ່ຽນແປງດິນຟ້າອາກາດ ແລະ ເຣດ+

# ຄຳຖາມທີ 4.

## ເປັນຫຍັງຈຶ່ງຈຳເປັນຕ້ອງເຊື່ອມວຽກງານບົດບາດຍິງ-ຊາຍ ເຂົ້າໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+?

ເຫດຜົນໃນການເຊື່ອມໂຍງບົດບາດຍິງ-ຊາຍເຂົ້າຢູ່ໃນ ເຣດ+ ແມ່ນອີງໃສ່ວິທີການທີ່ໃຊ້ສິດທິມະນຸດເປັນຫລັກເພື່ອການພັດທະນາ ແລະ ຮັບປະກັນຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ. ເຫດຜົນສຳຄັນອີກອັນໜຶ່ງ ສຳລັບວິທີການເຊື່ອມໂຍງບົດບາດຍິງ-ຊາຍເຂົ້າໃນ ເຣດ+ ແມ່ນເພື່ອປັບປຸງປະສິດທິພາບໃຫ້ດີຂຶ້ນ. ແມ່ຍິງ ຄວນຈະເປັນຕົວແທນໃນການປ່ຽນແປງ ເພື່ອຜ່ອນເບົາ ຫຼື ປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດຫລາຍກວ່າ ທີ່ຈະມີແຕ່ຄວາມດ້ອຍໂອກາດຈາກການປ່ຽນແປງດິນຟ້າອາກາດ. ດັ່ງນັ້ນ, ການເຊື່ອມໂຍງບົດບາດຍິງ-ຊາຍ ເຂົ້າໃນນະໂຍບາຍ ແລະ ການວາງແຜນ ເຣດ+ ຈະເຮັດໃຫ້ການວາງແຜນງານມີຜົນໄດ້ຮັບສູງ ແລະ ມີປະສິດທິພາບຫຼາຍກວ່າເກົ່າ.

ໃນຄຳຖາມທີ່ຜ່ານມາ, ພວກເຮົາ ໄດ້ສົນທະນາພາລະບົດບາດ, ສິດທິ, ຄວາມຮັບຜິດຊອບ, ຄວາມຮູ້, ແລະ ທັກສະ ທີ່ແຕກຕ່າງກັນຂອງຜູ້ຊາຍ ແລະ ແມ່ຍິງ ຢູ່ໃນຂະແໜງການປ່າໄມ້. ເຖິງຢ່າງໃດກໍ່ຕາມ, ມີຫຼັກຖານພຽງເລັກໜ້ອຍ ທີ່ສະແດງໃຫ້ເຫັນວ່າ ສະຖາບັນຄຸ້ມຄອງປ່າໄມ້, ລວມທັງອົງການຈັດຕັ້ງຂອງລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ໄດ້ປະຕິບັດນະໂຍບາຍ ແລະ ແຜນການທີ່ຖືເອົາບົດບາດຍິງຊາຍເປັນໃຈກາງຢ່າງເປັນລະບົບ ແລະ ມີຄວາມສຳຄັນ ຊຶ່ງສ່ວນໜຶ່ງ ອາດແມ່ນຍ້ອນຄວາມເຂົ້າໃຈທີ່ຈຳກັດກ່ຽວກັບປະເດັນບັນຫາບົດບາດຍິງ-ຊາຍຂອງບັນດາສະຖາບັນ ແລະ ຜູ້ວາງນະໂຍບາຍເຫລົ່ານັ້ນ, ເຊັ່ນດຽວກັນກັບຄວາມຈິງທີ່ວ່າບົດບາດຂອງແມ່ຍິງທີ່ເປັນຜູ້ກ່ຽວຂ້ອງຫຼັກໃນຂະແໜງການປ່າໄມ້ ບໍ່ຄ່ອຍຈະຖືກຍອມຮັບ. ນອກຈາກຄວາມລຳອຽງໃນສະຖາບັນແລ້ວ, ຍັງມີຄວາມຮັບຮູ້ໂດຍທົ່ວໄປວ່າ ແມ່ຍິງມີຄຸນນະພາບການເປັນຜູ້ນຳພາຕ່ຳ ຍ້ອນວ່າລະດັບການສຶກສາຂອງພວກເຂົາເຈົ້າຕ່ຳກວ່າ ຈຶ່ງປ່ອຍໃຫ້ຜູ້ຊາຍຢູ່ໃນຕຳແໜ່ງທີ່ມີອຳນາດເໜືອກວ່າ ໃນການວາງແຜນ ແລະ ຕັດສິນໃຈກ່ຽວກັບການຄຸ້ມຄອງປ່າໄມ້.

ການສຶກສາທີ່ດຳເນີນໂດຍ USAID[2] ກ່ຽວກັບການປະເມີນຜົນໃນການເຊື່ອມບົດບາດຍິງ-ຊາຍ ແລະ ຄວາມເຂົ້າໃຈກ່ຽວກັບຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ໃນປະເທດ ກຳປູເຈຍ ພົບວ່າ ໃນໄລຍະ 4 ປີຜ່ານມານີ້ ບໍ່ໄດ້ມີການປ່ຽນແປງຫຍັງຫລາຍທີ່ມີຜົນຕໍ່ທັດສະນະ ແລະ ມາດຕະຖານທີ່ເຄີຍປະຕິບັດກັນມາແຕ່ກ່ອນ ກ່ຽວກັບພາລະບົດບາດຂອງຜູ້ຊາຍ ແລະ ແມ່ຍິງ ແລະ ວິທີການທີ່ຜູ້ຊາຍ ແລະ ແມ່ຍິງພົວພັນຊຶ່ງກັນ ແລະ ກັນຢ່າງຖືກຕ້ອງຕາມປະເພນີ. ໂດຍທົ່ວໄປແລ້ວ, ຄວາມຮັບຮູ້ ແລະ ຄວາມຄິດເຫັນ ເຫລົ່ານັ້ນ ໄດ້ຖືກຍອມຮັບ ໂດຍ ບໍ່ມີຫຼັກຖານ, ເພາະສະນັ້ນ ຈຶ່ງກໍ່ໃຫ້ເກີດສິ່ງທ້າທາຍທີ່ສະລັບຊັບຊ້ອນໃນການເຊື່ອມ ນະໂຍບາຍ ແລະ ການປະຕິບັດວຽກງານບົດບາດຍິງ-ຊາຍ.

---

2 USAID (2010). Gender Assessment, USAID/Cambodia.

ການຄົ້ນຄວ້າກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ແຕກຕ່າງກັນຂອງແມ່ຍິງ ແລະ ຜູ້ຊາຍ ສາມາດຊ່ວຍປັບປຸງນະໂຍບາຍ ແລະ ແຜນປະຕິບັດໃຫ້ດີຂຶ້ນ ໂດຍອີງໃສ່ບົດຮຽນທີ່ຖອດຖອນໄດ້. ນອກຈາກນັ້ນ, ການຂາດຂໍ້ມູນແບບແຍກເພດ ເຮັດໃຫ້ເກີດມີອຳນາດເໜືອກວ່າຂອງຜູ້ຊາຍໃນຂະບວນການຕັດສິນໃຈ, ແລະ ການກີດກັ້ນບໍ່ໃຫ້ໂອກາດແມ່ຍິງໃນຂະບວນການຕັດສິນໃຈ ແລະ ວາງແຜນ ກໍ່ຍັງດຳເນີນຕໍ່ໄປ.

ໃນວຽກງານ ເຣດ+ ຈຳເປັນຕ້ອງເຮັດໃຫ້ທັງຜູ້ຊາຍ ແລະ ແມ່ຍິງ ໄດ້ມີສ່ວນຮ່ວມພົວພັນໃນການພັດທະນາ ນະໂຍບາຍ ແລະ ແຜນການ, ແລະ ການປະຕິບັດ ຊຶ່ງພິສູດໃຫ້ເຫັນວ່າ ມີການເພິ່ງພາອາໄສຊຶ່ງກັນ ແລະ ກັນແທ້ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ໃນການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້. ນອກຈາກນັ້ນ, ການເຂົ້າໄປ ຊ່ວຍເຫຼືອໃນການຄຸ້ມຄອງທຸກຢ່າງ ແມ່ນໄດ້ປະຕິບັດຕາມ ເຣດ+, ເຊັ່ນ ການເຂົ້າເຖິງຊັບພະຍາກອນປ່າໄມ້ທີ່ຫວງຫ້າມ ເພື່ອຫຼຸດຜ່ອນການເຮັດໃຫ້ປ່າໄມ້ເສື່ອມໂຊມ, ອາດຈະມີຜົນກະທົບໃນທາງລົບຕໍ່ວຽກປະຈຳວັນຂອງແມ່ຍິງ, ເພາະວ່າ ພວກເຂົາເຈົ້າ ມີຄວາມຮັບຜິດຊອບທີ່ສຳຄັນເພື່ອຈະໃຫ້ກຸ້ມຢູ່ກຸ້ມກິນໃນຄອບຄົວ.

ໃນທັດສະນະທີ່ກ່າວມາຂ້າງເທິງນັ້ນ, ໄດ້ພິສູດໃຫ້ເຫັນວ່າ ໂຄງການ ຫຼື ການເຂົ້າໄປຊ່ວຍເຫຼືອໃນການປ່ຽນແປງ ດິນຟ້າອາກາດ ແລະ ເຣດ+ ຄວນມີຈຸດສຸມສະເພາະຄືກັນ ໃນການເຮັດໃຫ້ແມ່ຍິງໄດ້ຮັບຮູ້ຂໍ້ມູນຂ່າວສານ ແລະ ເປັນຜູ້ມີ ສ່ວນຮ່ວມເຄື່ອນໄຫວໃນຂະບວນການຕັດສິນໃຈ ແລະ ປຶກສາຫາລື ໄປຄຽງຄູ່ກັບຜູ້ຊາຍ ຊຶ່ງຈະຊ່ວຍໃນການໝູນໃຊ້ ປະໂຫຍດຈາກຄວາມຮູ້ ແລະ ຄວາມສາມາດທີ່ຫຼາກຫຼາຍຂອງຜູ້ຊາຍ ແລະ ແມ່ຍິງ ເພື່ອແກ້ໄຂບັນຫາດ້ອຍໂອກາດ ຕ່າງໆ ຊຶ່ງທັງຜູ້ຊາຍ ແລະ ແມ່ຍິງ ມັກຈະພົບພໍ້ ໃຫ້ເທົ່າທຽມກັນ.

ຄວາມໂປ່ງໃສ ແລະ ການສໍ້ລາດບັງຫຼວງທີ່ກ່ຽວຂ້ອງກັບທຸລະກຳທາງດ້ານການເງິນຂອງ ເຣດ+ ແມ່ນສ່ວນປະກອບ ທີ່ສຳຄັນອີກອັນໜຶ່ງ ທີ່ຮັບປະກັນການເຂົ້າຮ່ວມເຄື່ອນໄຫວຂອງແມ່ຍິງ ເພື່ອປະຕິບັດຕາມກົນໄກການຄຸ້ມກັນໃນ ເຣດ+. ຄາດວ່າວິທີການເຊື່ອມໂຍງບົດບາດຍິງ-ຊາຍ ຈະຊ່ວຍໃນການຮັບປະກັນຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຕໍ່ ທຸລະກຳດ້ານການເງິນທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ເວົ້າລວມ ແລະ ເວົ້າສະເພາະ ກ່ຽວກັບ ເຣດ+. ການສຶກສາ[3] ໄດ້ສະແດງໃຫ້ເຫັນວ່າ ແມ່ຍິງຈະບໍ່ຍອມຮັບສິນບົນ ແລະ ມີສ່ວນພົວພັນໜ້ອຍໃນການກະທຳທີ່ຜິດກົດໝາຍ, ແລະ ດັ່ງນັ້ນ ຈຶ່ງຫຼຸດຜ່ອນການສໍ້ລາດບັງຫຼວງທີ່ອາດເກີດຂຶ້ນໄດ້. ສະນັ້ນ, ການນຳເອົາວິທີການທີ່ທ່ຽງທຳຂອງບົດບາດຍິງ-ຊາຍ ມາໃຊ້ ຈະສາມາດປະກອບສ່ວນເຂົ້າໃນການສົ່ງເສີມການກະຈາຍຜົນປະໂຫຍດທີ່ຍຸດຕິທຳ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ແລະ ມີລະບົບການປົກຄອງທີ່ດີໃນລະດັບທ້ອງຖິ່ນອີກດ້ວຍ (ເບິ່ງກ່ອງທີ 5).

3 The World Bank (2012) World Development Report 2012: Gender Equality and Development, Washington DC: The World Bank. Available at: http://go.worldbank.org/cqctmsfi40



### ກ່ອງທີ 5: ຜົນກະທົບໃນການບໍ່ໃຫ້ແມ່ຍິງເຂົ້າຮ່ວມໃນຂະແໜງການປ່າໄມ້ຂອງປະເທດ ເນປານ

ການສຶກສາໃນປະເທດ ເນປານ ຊີ້ໃຫ້ເຫັນວ່າ ການບໍ່ໃຫ້ແມ່ຍິງເຂົ້າຮ່ວມໃນການຄຸ້ມຄອງປ່າໄມ້ ສາມາດເຮັດໃຫ້ເກີດຜົນໃນທາງລົບຕາມມາ ບໍ່ສະເພາະແຕ່ເພື່ອຄວາມທ່ຽງທຳໃນບົດບາດຍິງ-ຊາຍ ແລະ ການໃຫ້ອຳນາດແມ່ຍິງ, ແຕ່ຍັງເພື່ອປະຕິບັດໜ້າທີ່ໃຫ້ມີປະສິດທິພາບ ແລະ ຄວາມຍືນຍົງໃນໄລຍະຍາວຂອງໂຄງການນີ້ອີກດ້ວຍ. ການຂາດການມີສ່ວນຮ່ວມຂອງແມ່ຍິງໃນຂະແໜງການປ່າໄມ້ ໄດ້ພິສູດໃຫ້ເຫັນວ່າ ມີຜົນກະທົບທີ່ມີຜົນຮ້າຍ. ໂຄງການປູກປ່າໄມ້ຄືນໃໝ່ໃນປະເທດ ເນປານ ໂດຍບໍ່ມີທັດສະນະບົດບາດຍິງ-ຊາຍ ໄດ້ພົບບັນຫາໃນເວລາປູກ, ການປົກປັກຮັກສາປ່າໄມ້, ແລະ ປະຕິບັດກົດລະບຽບ ທີ່ປ້ອງກັນປ່າສະຫງວນ. ເພາະສະນັ້ນ ການລວມເອົາຄວາມຕ້ອງການ ແລະ ບູລິມະສິດຂອງແມ່ຍິງ ເຂົ້າໃນປ່າໄມ້ຊຸມຊົນ ແມ່ນເປັນສິ່ງຈຳເປັນ ເພື່ອສົ່ງເສີມການອະນຸລັກແບບຍືນຍົງ

ແຫຼ່ງຂໍ້ມູນ: Agrawal B. 2001. Participatory exclusions, community forestry and gender: An analysis for South Asia and a conceptual framework. World Development, 29 (10): 1623–1648.

# ຄຳຖາມທີ 5:

## ປະເດັນສຳຄັນກ່ຽວກັບບົດບາດຍິງ-ຊາຍ ເພື່ອສົ່ງເສີມພາລະບົດບາດຂອງຜູ້ຊາຍ ແລະ ແມ່ຍິງ ຢູ່ຂັ້ນຮາກຖານ ໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ໃຫ້ເຂັ້ມແຂງຂຶ້ນ ມີຫຍັງແດ່?

ເພື່ອເຮັດໃຫ້ພາລະບົດບາດຂອງຜູ້ຊາຍ ແລະ ແມ່ຍິງ ໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ຢູ່ໃນລະດັບຮາກຖານເຂັ້ມແຂງຂຶ້ນ ຈຳເປັນຕ້ອງໄດ້ປະຕິບັດບາດກ້າວຈຳນວນໜຶ່ງດັ່ງລຸ່ມນີ້:

i. **ການຮັບຮູ້ສິດທິຂອງແມ່ຍິງຕໍ່ຊັບພະຍາກອນປ່າໄມ້:** ແມ່ຍິງມີພາລະບົດບາດທີ່ສຳຄັນໃນການຄຸ້ມຄອງປ່າໄມ້, ໂດຍສະເພາະ ໃນເມື່ອເວລາພາລະບົດບາດໃນການເຂົ້າຮ່ວມ ແລະ ຕັດສິນໃຈຂອງພວກເຂົາເຈົ້າໄດ້ຖືກຮັບຮູ້ ພາຍໃນກອບລວມຂອງສິດທິ (ເບິ່ງກ່ອງທີ 6). ສິ່ງດັ່ງກ່າວນີ້ ເຫັນວ່າມີຄວາມສຳຄັນ, ເພາະວ່າເມື່ອຂາດສິດທິເຫຼົ່ານີ້ ສະຖານະຂອງແມ່ຍິງ ແລະ ຄອບຄົວ ອາດຮ້າຍແຮງກວ່າເກົ່າ. ໄດ້ຍົກໃຫ້ເຫັນເຖິງຄວາມເປັນຫ່ວງກ່ຽວກັບ ແຫລ່ງເງິນທຶນປ່າໄມ້ໃໝ່ໃນຮູບແບບຂອງ ເຣດ+ ຊຶ່ງອາດຈະຊຸກຍູ້ໃຫ້ລັດຖະບານ ຈຳກັດ ຫຼື ຫ້າມບໍ່ໃຫ້ປະຊາຊົນທ້ອງຖິ່ນ[4] ເຂົ້າເຖິງປ່າໄມ້, ຫຼື ອາດຈະສ້າງສິ່ງຈູງໃຈໃຫ້ຜູ້ກ່ຽວຂ້ອງອື່ນໆ ຮຽກຮ້ອງຄ່າຊົດເຊີຍສຳລັບຊັບພະຍາກອນປ່າໄມ້. ສະຖານະການເຊັ່ນນີ້ ຈະມີຜົນກະທົບໂດຍກົງຕໍ່ຜົນປະໂຫຍດທີ່ຈະໄດ້ຮັບຈາກ ເຣດ+ ແລະ ໂຄງການທີ່ຄ້າຍຄືກັນ ວ່າຈະແບ່ງປັນກັນແນວໃດ ລະຫວ່າງຜູ້ຊາຍ ແລະ ແມ່ຍິງ, ເພາະວ່າ ໂດຍທົ່ວໄປແລ້ວ, ແມ່ຍິງມີຄວາມຮັບຜິດຊອບທີ່ສຳຄັນ ສຳລັບການເກັບຊັບພະຍາກອນປ່າໄມ້ເພື່ອການດຳລົງຊີວິດປະຈຳວັນຂອງຄົວເຮືອນ.

### ກ່ອງທີ 6: ການລວບລວມວິທີການກ່ຽວກັບສິດທິ

ການລວບລວມວິທີການກ່ຽວກັບສິດທິ ລວມມີ ຊຸດຂອງສິດທິຕາມປະເພນີ ແລະ ຕາມກົດໝາຍສຳລັບຊົນເຜົ່າພື້ນເມືອງ ແລະ ຊຸມຊົນທີ່ເພິ່ງພາອາໄສປ່າໄມ້:

ກ) ສິດທິໃນການເຂົ້າເຖິງ: ຊຸມຊົນສາມາດເຂົ້າເຖິງຊັບພະຍາກອນປ່າໄມ້

ຂ) ສິດທິໃນການນຳໃຊ້: ຊຸມຊົນສາມາດຂຸດຄົ້ນໄມ້ທ່ອນ ຫຼື ເຄື່ອງປ່າຂອງດົງອື່ນໆ

ຄ) ສິດທິໃນການຄຸ້ມຄອງ: ຊຸມຊົນສາມາດຕັດສິນໃຈກ່ຽວກັບການຄຸ້ມຄອງປ່າໄມ້

ງ) ສິດທິໃນການຂັບໄລ່: ຊຸມຊົນສາມາດຂັບໄລ່ຄົນພາຍນອກອອກຈາກປ່າໄມ້

ຈ) ສິດທິໃນການໂອນ: ຊຸມຊົນສາມາດໃຫ້ເຊົ່າຊັບພະຍາກອນ, ຂາຍ, ຫຼື ນຳໃຊ້ຊັບພະຍາກອນເປັນສິ່ງຄ້ຳປະກັນ

ແຫຼ່ງຂໍ້ມູນ: RRI. 2012. What Rights? A Comparative Analysis of Developing Countries' National Legislation on Community and Indigenous Peoples' Forest Tenure Rights. Washington DC: Rights and Resources Initiative

---

4 Local people are defined as those who reside in and around the forests and whose livelihoods heavily depend on forest products and services. Local people include indigenous communities, ethnic minorities, migrants and smallholder farmers in rural areas.



ການສຶກສາຈາກພື້ນທີ່ຂອງໂຄງການທົດລອງ ເຣດ+ ໃນປະເທດ ເນປານ ໄດ້ຊີ້ໃຫ້ເຫັນວ່າ ການມີສ່ວນຮ່ວມທີ່ມີປະສິດທິຜົນຂອງແມ່ຍິງໃນປ່າໄມ້ຊຸມຊົນ ເຮັດໃຫ້ການຟື້ນຟູປ່າໄມ້ ແລະ ຫຼຸດຜ່ອນການປ່ອຍທາດກາກບອນ[5] ເພີ້ມຂຶ້ນ. ໃນອີກດ້ານໜຶ່ງ, ການຂາດຄວາມກະຈ່າງແຈ້ງໃນການຖືຄອງ ຈະນຳໄປສູ່ການເຂົ້າເຖິງດິນ, ຕົ້ນໄມ້, ທາດກາກບອນ, ແລະ ຊັບພະຍາກອນປ່າໄມ້ອື່ນໆ ທີ່ບໍ່ແນ່ນອນສຳລັບແມ່ຍິງ ຊຶ່ງມັກຈະເປັນຜູ້ເສຍປຽບຢູ່ໃນທັງລະບອບຕາມປະເພນີນິຍົມ ແລະ ລະບອບຕາມກົດໝາຍ.

ii. **ການພັດທະນາຂີດຄວາມສາມາດຂອງແມ່ຍິງຢູ່ໃນລະດັບຕ່າງໆ** ແມ່ຍິງ ມັກຈະເຂົ້າເຖິງຊັບພະຍາກອນທຳມະຊາດ, ການເຄື່ອນໄຫວ, ຂໍ້ມູນໃໝ່, ໂອກາດພັດທະນາຂີດຄວາມສາມາດ, ແລະ ສະຖາບັນການເງິນສຳລັບສິນເຊື່ອ ທີ່ຈຳກັດ, ເມື່ອສົມທຽບໃສ່ຄູ່ຮ່ວມງານທີ່ເປັນເພດຊາຍ. ຂໍ້ຈຳກັດເຫຼົ່ານີ້ ໄດ້ຈຳກັດຄວາມສາມາດຂອງແມ່ຍິງ ເພື່ອປະກອບສ່ວນຢ່າງມີປະສິດທິຜົນ ເຂົ້າໃນຂະບວນການປຶກສາຫາລື ຫຼື ຕັດສິນໃຈທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້. ມັນຍັງເພີ້ມຄວາມດ້ອຍໂອກາດຈາກດິນຟ້າອາກາດທີ່ກໍ່ໃຫ້ເກີດໄພພິບັດອີກດ້ວຍ. ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ມີຈຸດສຸມໃນການພັດທະນາຂີດຄວາມສາມາດຂອງແມ່ຍິງ ແລະ ພັນທະມິດ, ເຄືອຂ່າຍ ແລະ ກອງປະຊຸມປຶກສາຫາລືຕ່າງໆທີ່ກ່ຽວຂ້ອງກັບ ເຣດ+ ຕື່ມ. ການພັດທະນາຂີດຄວາມສາມາດ ຈະຕ້ອງລວມເອົາຄວາມຮູ້ພື້ນຖານກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+, ທັກສະໃນການເຈລະຈາຕໍ່ລອງໃນການເຂົ້າຮ່ວມພົວພັນວຽກຂອງພວກເຂົາເຈົ້າໃນໂຄງການ ແລະ ນະໂຍບາຍຄຸ້ມຄອງປ່າໄມ້, ການຄຸ້ມຄອງກອງທຶນ, ແລະ ວິຊາການດ້ານອື່ນໆ ເຊັ່ນ: ເຕັກນິກປ່າໄມ້ ແລະ ການກ້າເບ້ຍໄມ້, ການປະເມີນຊີວະມວນສານ, ການວັດແທກກ່ຽວກັບການເກັບກັກທາດກາກບອນ, ແລະ ວິທີການຕິດຕາມ ແລະ ການລາຍງານ (ເບິ່ງກ່ອງທີ 7).

---

[5] Agarwal, B. 2009. Gender and forest conservation: The impact of women's participation in community forest governance. Ecological economics 68: 2785–2799.



### ກ່ອງທີ 7: ພາລະບົດບາດຂອງແມ່ຍິງໃນການຄຸ້ມຄອງປ່າໄມ້ຊຸມຊົນ

ກຸ່ມແມ່ຍິງ ມີປະສິດທິພາບໃນການຄຸ້ມຄອງປ່າໄມ້ຊຸມຊົນ ແລະ ຄວນມີສ່ວນຮ່ວມໃນການສ້າງຂີດຄວາມສາມາດ ແລະ ການແບ່ງປັນຜົນປະໂຫຍດສຳລັບ ເຣດ+. ຍົກຕົວຢ່າງ, ໃນປະເທດຊິມບາເວ ເກີນກວ່າເຄິ່ງໜຶ່ງຂອງ 800.000 ຄອບຄົວ ດຳລົງຊີວິດຢູ່ໃນເຂດຊຸມຊົນທີ່ນຳພາໂດຍແມ່ຍິງ ແລະ ກຸ່ມແມ່ຍິງ ຮັບຜິດຊອບຊັບພະຍາກອນປ່າໄມ້ ແລະ ໂຄງການພັດທະນາ ໂດຍຜ່ານການເປັນເຈົ້າຂອງປ່າປູກ, ການປູກຕົ້ນໄມ້, ແລະ ການພັດທະນາສວນກ້າເບ້ຍໄມ້. ໃນປະເທດເນປານ, ກຸ່ມແມ່ຍິງທີ່ນຳໃຊ້ປ່າໄມ້ຊຸມຊົນ ມີເກີນກວ່າ 800 ກຸ່ມ ທີ່ມີບົດບາດໃນການປົກປັກຮັກສາປ່າໄມ້, ການຄຸ້ມຄອງສວນກ້າເບ້ຍໄມ້ ແລະ ການປູກຕົ້ນໄມ້ໃຫ້ເປັນປ່າໃສ່ດິນຊຸດໂຊມ ສິ່ງຜົນໃຫ້ດິນເຈື່ອນມີໜ້ອຍລົງກວ່າເກົ່າ, ການຕອບສະໜອງເຊື້ອໄຟ ແລະ ອາຫານສັດ, ອັດຕາການລອດຕາຍຂອງຕົ້ນໄມ້ ມີເຖິງ 60-80%, ການເກືອດຫ້າມຕັດຕົ້ນໄມ້ ແລະ ອື່ນໆ. ເມື່ອກຸ່ມແມ່ຍິງ ໄດ້ປະສານກັບອົງການຈັດຕັ້ງທີ່ບໍ່ສັງກັດລັດ (NGO) ອົງການໜຶ່ງໃນປະເທດ ກຳປູເຈຍ ເພື່ອສ້າງເປັນເຄືອຂ່າຍ, ພວກເຂົາເຈົ້າ ສາມາດຕໍ່ລອງລາຄາ, ຈັດການຂົນສົ່ງໄປຕະຫຼາດ, ສ້າງຕັ້ງ ແລະ ດຳເນີນສະຫະກອນໂຮງສີເຂົ້າ ເພື່ອເພີ້ມຜະລິດຕະພາບ ແລະ ລາຍໄດ້, ແລະມີອິດທິພົນຕໍ່ການຕັດສິນໃຈຢູ່ໃນທຸກລະດັບຂອງການປົກຄອງ.

ແຫຼ່ງຂໍ້ມູນ: USAID (2011): Gender and REDD+: An Asia Regional Analysis (Draft). Downloaded from: http://www.rightsandresources.org/documents/files/doc_2307.df

iii. **ການປະເມີນຜົນໂດຍລວມກ່ຽວກັບບົດບາດຍິງ-ຊາຍ ເພື່ອປັບປຸງການວາງແຜນ ແລະ ພັດທະນາຂະແໜງການປ່າໄມ້:** ຈຳເປັນຕ້ອງໄດ້ດຳເນີນການປະເມີນໂດຍລວມກ່ຽວກັບບົດບາດຍິງ-ຊາຍເພື່ອປະເມີນ ແລະ ຮັບຮູ້ພາລະບົດບາດ, ຄວາມຮັບຜິດຊອບ, ຮູບແບບການນຳໃຊ້, ຄວາມຮູ້, ແລະ ທັກສະທີ່ຕ່າງກັນຂອງຜູ້ຊາຍ ແລະ ແມ່ຍິງ ໃນການຄຸ້ມຄອງປ່າໄມ້. ການປະເມີນນີ້ ຈະເປັນປັດໄຈທີ່ສຳຄັນ ເພື່ອຮັບຮູ້ພາລະບົດບາດຂອງຜູ້ຊາຍ ແລະ ແມ່ຍິງເປັນຢ່າງດີ, ແລະ ພັດທະນາແຜນການ ແລະ ນະໂຍບາຍທີ່ເຂົ້າໃຈຄວາມຕ້ອງການຂອງບົດບາດຍິງ-ຊາຍ ໃນການຄຸ້ມຄອງປ່າໄມ້. ໃນທາງກັບກັນ, ແຜນການ ແລະ ນະໂຍບາຍນີ້ ຈະຊ່ວຍສ້າງເປັນບ່ອນທີ່ສຳຄັນສຳລັບຜູ້ຊາຍ ແລະ ແມ່ຍິງ ເພື່ອຈະໄດ້ຮັບປະສົບການ ແລະ ຄວາມໝັ້ນໃຈ, ແລະ ສ້າງເຄືອຂ່າຍທີ່ສາມາດຊ່ວຍໃນການຊອກຫາການສະໜັບສະໜູນໃນລະດັບສູງ ເພື່ອສະໜັບສະໜູນນະໂຍບາຍການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນການປ່ຽນແປງດິນຟ້າອາກາດ ແລະ ຂະແໜງການຂອງ ເຣດ+.

IV. **ການດຳເນີນການຄຸ້ມກັນ ໃນວຽກງານ ເຣດ+:** ໃນກໍລະນີປະຕິບັດ ເຣດ + ທີ່ວາງແຜນໄວ້ບໍ່ແທດເໝາະ ຫຼື ບໍ່ດີພໍ, ອາດຈະເກີດສິ່ງທ້າທາຍ ແລະ ຄວາມສ່ຽງຕໍ່ປ່າໄມ້, ຊີວະນາໆພັນ, ແລະ ປະຊາຊົນທີ່ເພິ່ງພາອາໄສຊັບພະຍາກອນເຫລົ່ານີ້ ເພື່ອການດຳລົງຊີວິດຂອງພວກເຂົາເຈົ້າ. ການບໍ່ເອົາໃຈໃສ່ການຄຸ້ມກັນ ເຣດ+ ອາດເຮັດໃຫ້ເກີດການສູນເສຍສິດທິການນຳໃຊ້ດິນ ແລະ ຊັບພະຍາກອນດິນ, ໂດດດ່ຽວທາງສັງຄົມ, ການຍຶດເອົາດິນໂດຍຜູ້ມີອຳນາດ, ແລະ ການສູນເສຍຄວາມຮູ້ດ້ານລະບົບນິເວດ ຂອງຜູ້ຊາຍ ແລະ ແມ່ຍິງ, ແລະ ບັນດາຄວາມສ່ຽງອື່ນໆທີ່ຄ້າຍຄືກັນ.

ໃນການດຳເນີນການດັ່ງກ່າວ ອີງການຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍ ໄດ້ພັດທະນາຊຸດການຄຸ້ມກັນທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ສຳລັບ ເຣດ+, ຊຶ່ງລວມມີບັນດາກົນໄກຕ່າງໆເພື່ອຮັບປະກັນວ່າຂະບວນການ ແລະ ການປະຕິບັດ ເຣດ+ ຈະບໍ່ສ້າງຜົນກະທົບໃນທາງລົບຕໍ່ປະຊາຊົນທ້ອງຖິ່ນ ແລະ ສະພາບແວດລ້ອມ.[6] ການເຊື່ອມບົດບາດຍິງ-ຊາຍ, ການເຄົາລົບສິດທິໃນຫຼັກການ ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ກ່ອນລ່ວງໜ້າ (FPIC), ການມີສ່ວນຮ່ວມແທ້ ແລະ ເຕັມສ່ວນຂອງປະຊາຊົນທ້ອງຖິ່ນ, ການຄ້ຳປະກັນໃນການດຳລົງຊີວິດ ແລະ ການແບ່ງປັນຜົນປະໂຫຍດທີ່ເທົ່າທຽມ ແມ່ນຖືວ່າສຳຄັນເພື່ອຮັບປະກັນ ໃຫ້ຍຸດທະສາດແຫ່ງຊາດກ່ຽວກັບ ເຣດ+ ສອດຄ່ອງກັບກົດໝາຍແຫ່ງຊາດ ແລະ ທ້ອງຖິ່ນ, ສົນທິສັນຍາສາກົນ ແລະ ເຄື່ອງມືອື່ນໆ ທີ່ເຫັນວ່າເໝາະສົມ.

---

[6] Silori et al. 2013. Social safeguards in REDD+: A review of existing initiatives and challenges. Journal of Forests and Livelihoods. Vol. 11(2): 27-36.



# ພາກທີ 3: ບັນດາແຜນການ ແລະ ນະໂຍບາຍ

# ຄຳຖາມທີ 6.

## ມີເຄື່ອງມື ນະໂຍບາຍ ແລະ ກອບວຽກໃດແດ່ ຢູ່ໃນລະດັບສາກົນ ເພື່ອສົ່ງເສີມສິດທິມະນຸດ ແລະ ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ?

i. ສົນທິສັນຍາກ່ຽວກັບການລົບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ (CEDAW), ທີ່ຖືກຮັບຮອງເອົາໃນປີ 1979 ໂດຍກອງປະຊຸມສາມັນຂອງສະຫະປະຊາຊາດ, ທີ່ໃຫ້ກອບວຽກ ສຳລັບຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ໃຫ້ເປັນສິດທິຂັ້ນພື້ນຖານຂອງມະນຸດ. ສົນທິສັນຍາ CEDAW ຮັບຮູ້ສິດທິຂອງແມ່ຍິງໃນການຖືຄອງຊັບສິນ ແລະ ອອກໃບຢັ້ງຢືນໃຫ້ແມ່ຍິງຊົນນະບົດໂດຍສະເພາະ.

ii. ກອງປະຊຸມໂລກຄັ້ງທີສີ່ກ່ຽວກັບແມ່ຍິງ, ທີ່ຈັດຂຶ້ນ ຢູ່ນະຄອນປັກກິ່ງ, ປະເທດຈີນ, ໃນ ເດືອນກັນຍາ 1995, ເຮັດໃຫ້ເກີດມີຮ່າງຂອງຖະແຫຼງການປັກກິ່ງ ແລະ ນະໂຍບາຍສຳລັບແຜນປະຕິບັດໃນປີ 1996 ຊຶ່ງເໜັ້ນຄືນສິດທິຂອງແມ່ຍິງເປັນສິດທິຂອງມະນຸດ, ແລະ ໄດ້ປະກາດວ່າ ການລົບລ້າງຄວາມທຸກຍາກທີ່ຮຽກຮ້ອງໃຫ້ມີການເຂົ້າຮ່ວມຂອງແມ່ຍິງ ໃນການພັດທະນາດ້ານເສດຖະກິດ ແລະ ສັງຄົມ, ລວມທັງໂອກາດທີ່ເທົ່າທຽມກັນສຳລັບແມ່ຍິງ ແລະ ຜູ້ຊາຍ ໃນການພັດທະນາແບບຍືນຍົງ.

iii. ຖະແຫຼງການຂອງສະຫະປະຊາຊາດ ກ່ຽວກັບສິດທິຂອງຊົນເຜົ່າພື້ນເມືອງ (UNDRIP) ທີ່ຖືກຮັບຮອງເອົາໃນປີ 2007, ຮັບຮູ້ສິດທິຂອງຊົນເຜົ່າພື້ນເມືອງໃນວົງກວ້າງ ກ່ຽວກັບປະເດັນບັນຫາຕ່າງໆ ແລະ ສະໜອງກອບສາກົນໃຫ້ແກ່ຊຸມຊົນນານາຊາດ. ຊຶ່ງລວມມີ ຫຼັກການຂອງ FPIC. ມີຂໍ້ກຳນົດ ເພື່ອໃຫ້ເອົາໃຈໃສ່ເປັນພິເສດຕໍ່ສິດທິ ແລະ ຄວາມຕ້ອງການ ຂອງແມ່ຍິງຊົນເຜົ່າພື້ນເມືອງ, ດັ່ງນັ້ນ, ປະເທດຕ່າງໆ ສາມາດປົກປ້ອງພວກເຂົາເຈົ້າຈາກຄວາມຮຸນແຮງ ແລະ ການຈຳແນກ.

# ຄຳຖາມທີ 7.

## ມີໂຄງການລິເລີ່ມໃດແດ່ ທີ່ປະຕິບັດຢູ່ໃນລະດັບສາກົນ ເພື່ອສົ່ງເສີມການເຊື່ອມໂຍງວຽກງານບົດບາດຍິງ-ຊາຍ ເຂົ້າໃນກອງປະຊຸມປຶກສາຫາລືກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+?

ການຮັບຮູ້ກ່ຽວກັບສິດທິໃນການຖືຄອງຊັບສິນຂອງແມ່ຍິງ, ພ້ອມດ້ວຍໃບຢັ້ງຢືນ ສະເພາະໃຫ້ແກ່ແມ່ຍິງຊົນນະບົດ, ພາຍໃຕ້ສົນທິສັນຍາ CEDAW ແລະ ຂໍ້ຕົກລົງ Rio+20[7], ມີຄວາມສອດຄ່ອງສະເພາະກັບການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນນະໂຍບາຍ ແລະ ການພັດທະນາໂຄງການປ່ຽນແປງດິນຟ້າອາກາດ ແລະ ເຣດ+.

ໃນກອງປະຊຸມປະເທດພາຄີ (COP) ຄັ້ງທີ 16 ກ່ຽວກັບກອບອານຸສັນຍາຂອງສະຫະປະຊາຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ (UNFCCC) ທີ່ຈັດຂຶ້ນທີ່ຄັນຄູນ (Cancun), ປະເທດ ເມັກຊິໂກ ໃນປີ 2010, UNFCCC ໄດ້ນຳສະເໜີ "ຂໍ້ຕົກລົງຂອງ ຄັນຄູນ". ຂໍ້ຕົກລົງສ້າງເອກະສານອ້າງອີງຄືນອີກເພື່ອແກ້ໄຂບົດບາດຍິງ-ຊາຍທີ່ກ່ຽວພັນກັບການອອກແບບນະໂຍບາຍ ແລະ ການປະຕິບັດໂຄງການ ເຣດ+. ຊຶ່ງຊ່ວຍໃນການຍົກເອົາການສັງລວມຫຍໍ້ການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນການປຶກສາຫາລືກ່ຽວກັບການປ່ຽນແປງດິນຟ້າອາກາດ.

ໃນກອງປະຊຸມປະເທດພາຄີ ຄັ້ງທີ 18 ໃນປີ 2012, ທີ່ນະຄອນໂດຮາ, ປະເທດກາຕາ, ກອງເລຂາຂອງກອບສົນທິສັນຍາຂອງສະຫະປະຊາຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ (UNFCCC) ໄດ້ຮັບມອບໝາຍວຽກການຕິດຕາມຄວາມຄືບໜ້າໃນການປັບປຸງນະໂຍບາຍທີ່ເຂົ້າໃຈກ່ຽວກັບຄວາມຕ້ອງການຂອງບົດບາດຍິງ-ຊາຍ ເຂົ້າໃນການປ່ຽນແປງດິນຟ້າອາກາດ ຊຶ່ງຈະໄດ້ສືບຕໍ່ຕິດຕາມ ແລະ ທົບທວນຄືນໃນກອງປະຊຸມປະເທດພາຄີຄັ້ງທີ 19 ໃນປີ 2013 ທີ່ນະຄອນວໍຊໍ, ປະເທດ ໂປໂລຍ ຈົນຮອດກອງປະຊຸມປະເທດພາຄີຄັ້ງທີ 22 ໃນປີ 2016.

---

[7] Rio+20 is the short name for the United Nations Conference on Sustainable Development which took place in Rio de Janeiro, Brazil in June 2012 – twenty years after the 1992 Earth Summit in Rio. The focus of Rio+20 conference was to reduce poverty, advance social equity, and ensure environmental protection on an ever more populated planet. The official discussion focused on two main themes: how to build a green economy to achieve sustainable development and lift people out of poverty, and how to improve international coordination for sustainable development (http://www.un.org/en/sustainablefuture/index.shtml).

# ຄຳຖາມທີ 8.

## ແຜນການ ແລະ ນະໂຍບາຍແຫ່ງຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ, ເຣດ+, ແລະ ບົດບາດຍິງ-ຊາຍ ຢູ່ໃນບັນດາປະເທດຂອງໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ມີຫຍັງແດ່?

ດັ່ງທີ່ໄດ້ກ່າວໃນກ່ອນໜ້ານີ້, ໂຄງການການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ໄດ້ຈັດຕັ້ງປະຕິບັດຢູ່ໃນຫ້າປະເທດ, ໃນນັ້ນມີ ອິນໂດເນເຊຍ, ສປປ.ລາວ, ມຽນມາ, ເນປານ ແລະ ຫວຽດນາມ. ການສະຫຼຸບສັງລວມຫຍໍ້ກ່ຽວກັບນະໂຍບາຍ ແລະ ແຜນການແຫ່ງຊາດ ກ່ຽວກັບການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ໃນປະເທດເຫຼົ່ານີ້ ມີດັ່ງລຸ່ມນີ້:

### ປະເທດອິນໂດເນເຊຍ

ໃນນາມປະເທດທີ່ລົງນາມໃນສົນທິສັນຍາ CEDAW, ລັດຖະບານອິນໂດເນເຊຍ ໄດ້ລິເລີ່ມໂຄງການ ຢູ່ໃນລະດັບນະໂຍບາຍ ແລະ ສະຖາບັນ ເພື່ອແກ້ໄຂປະເດັນບັນຫາບົດບາດຍິງ-ຊາຍ ໃນບັນດາຂະແໜງການພັດທະນາ, ລວມທັງຂະແໜງການປ່າໄມ້. ບັນດາອົງການຈັດຕັ້ງເຄິ່ງລັດ ເຊັ່ນ ສະພາແມ່ຍິງອິນໂດເນເຊຍ, ຄະນະກຳມະການແມ່ຍິງແຂວງ, ຄະນະກຳມະການແມ່ຍິງເມືອງ, ແລະ ອົງການຈັດຕັ້ງ ອາສາສະໝັກຂັ້ນຮາກຖານ ມີການເຄື່ອນໄຫວໃນການແກ້ໄຂປະເດັນບັນຫາບົດບາດຍິງ-ຊາຍ ແລະ ໃຫ້ບໍລິການແກ່ແມ່ຍິງ ໃນຂະແໜງການພັດທະນາຕ່າງໆ. ດຳລັດຂອງປະທານປະເທດ ໃນປີ 2000 ໄດ້ອອກຄຳສັ່ງໃຫ້ທຸກກົມກອງຂອງລັດ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ ເພື່ອເຊື່ອມບົດບາດຍິງ-ຊາຍ ເຂົ້າໃນຂະບວນການວາງແຜນ,ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນຂອງພວກເຂົາເຈົ້າ.

ປະເທດອິນໂດເນເຊຍ ແມ່ນປະເທດທຳອິດທີ່ມີບົດສະເໜີແຜນການກຽມຄວາມພ້ອມ ເຣດ+ (R-PP) ທີ່ອະນຸມັດໂດຍທະນາຄານໂລກ ໃນປີ 2009. ການທົບທວນຄືນເອກະສານ R-PP ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າຈະກຳນົດຂະບວນການຂອງພາກສ່ວນທີ່ກ່ຽວຂ້ອງກັບ ເຣດ+ ແລະ ເໜັ້ນກຸ່ມຜູ້ດ້ອຍໂອກາດ, ລວມທັງຊຸມຊົນທີ່ເພິ່ງພາອາໄສປ່າໄມ້, ຊົນເຜົ່າພື້ນເມືອງ, ແມ່ຍິງ ແລະ ຊາວໜຸ່ມ ໃຫ້ເຂົ້າຮ່ວມໃນການສ້າງ ແລະ ປະຕິບັດໂຄງການ ເຣດ+, ຊຶ່ງກໍ່ບໍ່ໄດ້ສະເໜີຍຸດທະສາດທີ່ເໝາະສົມສະເພາະທີ່ແນໃສ່ກຸ່ມເປົ້າໝາຍເຫຼົ່ານີ້.

ການສືບຕໍ່ດຳເນີນການກຽມພ້ອມກ່ຽວກັບ ເຣດ+, ປະເທດ ອິນໂດເນເຊຍ ສຳເລັດຍຸດທະສາດແຫ່ງຊາດກ່ຽວກັບ ເຣດ+ ໃນປີ 2012. ຍຸດທະສາດ ອະທິບາຍຫ້າຫຼັກການສຳລັບການຈັດຕັ້ງປະຕິບັດ ເຣດ+ ຊຶ່ງລວມມີ ປະສິດທິຜົນ, ປະສິດທິພາບ, ຄວາມຍຸດຕິທຳ, ຄວາມໂປ່ງໃສ, ແລະ ຄວາມຮັບຜິດຊອບ.

ໃນການອະທິບາຍເງື່ອນໄຂສຳລັບຄວາມຍຸດຕິທຳ, ຄວາມສະເໝີພາບສຳລັບທຸກຄົນ ແລະ ການປົກປ້ອງສິດທິມະນຸດ ໃນການຄຸ້ມຄອງປ່າໄມ້, ໂດຍສະເພາະ ສຳລັບແມ່ຍິງ ແລະ ຊຸມຊົນທີ່ດ້ອຍໂອກາດຕໍ່ການປ່ຽນແປງທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ຖືເປັນເງື່ອນໄຂສຳຄັນໃນການຈັດຕັ້ງປະຕິບັດ ເຣດ+.



ນອກຈາກນັ້ນ, ຫຼັກການທີສີ່ໃນຫ້າຫຼັກການ ແມ່ນເນັ້ນໃສ່ການປ່ຽນແປງແບບແຜນ ແລະ ວັດທະນະທຳໃນການເຮັດວຽກ ໃນຂະແໜງການຄຸ້ມຄອງປ່າໄມ້ ເພື່ອຈັດຕັ້ງປະຕິບັດຍຸດທະສາດຂອງ ເຣດ+ ໃຫ້ມີປະສິດທິຜົນ. ໃນນີ້, ໃຫ້ຖືເອົາຄວາມເຂົ້າໃຈຄວາມຕ້ອງການຂອງບົດບາດຍິງ-ຊາຍ ເປັນຫຼັກການທີ່ສຳຄັນທີ່ສຸດ ຊຶ່ງເນັ້ນໃສ່ຄວາມສະເໝີພາບທາງດ້ານພາລະບົດບາດ, ຄວາມຕ້ອງການ ແລະ ຄວາມຮັບຜິດຊອບຂອງຜູ້ຊາຍ ແລະ ແມ່ຍິງ ເພື່ອສ້າງວັດທະນະທຳການເຮັດວຽກໃຫ້ດີກວ່າເກົ່າ.

ຄວາມເຂົ້າໃຈຄວາມຕ້ອງການຂອງບົດບາດຍິງ-ຊາຍ ແມ່ນຄວາມສາມາດ ເພື່ອຮັບຮູ້ປະເດັນບັນຫາ ແລະ ຄວາມຫ່ວງໄຍກ່ຽວກັບບົດບາດຍິງ-ຊາຍ, ລວມທັງຄວາມສາມາດ ເພື່ອຮັບຮູ້ທັດສະນະ ແລະ ຄວາມປາດຖະໜາທີ່ແຕກຕ່າງຂອງແມ່ຍິງ ຕາມສະພາບທາງດ້ານສັງຄົມ ແລະ ພາລະບົດບາດຂອງບົດບາດຍິງ-ຊາຍ ທີ່ຈະຕາມມາ. ນອກຈາກນັ້ນແລ້ວ, ຍັງເນັ້ນໃສ່ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການນຳໃຊ້ດິນ ແລະ ປ່າໄມ້ໂດຍຜ່ານ:

ກ) ການເພີ່ມຄວາມຍືດຍຸ່ນ ເພື່ອໃຫ້ມີຄວາມໂປ່ງໃສ ແລະ ການມີສ່ວນຮ່ວມ, ໂດຍສະເພາະ ກຸ່ມຜູ້ດ້ອຍໂອກາດ ເຊັ່ນ: ຊົນເຜົ່າພື້ນເມືອງ, ແມ່ຍິງ, ເດັກນ້ອຍ, ແລະ ຄົນທຸກຈົນ;

ຂ) ການພັດທະນາຂີດຄວາມສາມາດສຳລັບສະມາຊິກຊຸມຊົນ, ໂດຍສະເພາະ ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດອື່ນໆ, ເພື່ອປັບປຸງຄວາມເຂົ້າໃຈກ່ຽວກັບຂໍ້ມູນທີ່ມີ, ແລະ

ຄ) ການມີສ່ວນຮ່ວມໃນຂະບວນການຕັດສິນໃຈ.



ໃນການຄຸ້ມກັນທາງສັງຄົມ, ຍຸດທະສາດ ເຣດ+ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ແລະ ສິດທິຂອງກຸ່ມຜູ້ດ້ອຍໂອກາດ ເພື່ອໃຫ້ມີສ່ວນຮ່ວມຢ່າງເທົ່າທຽມໃນການຈັດຕັ້ງປະຕິບັດ ເຣດ+ ຊຶ່ງເປັນເງື່ອນໄຂຕໍ່າສຸດສໍາລັບການປະຕິບັດທີ່ມີປະສິດທິຜົນ. ມັນຍັງຊີ້ໃຫ້ເຫັນ ຄວາມຈໍາເປັນສໍາລັບການອອກແບບຂອບວຽກການຄຸ້ມກັນທາງສັງຄົມ ສໍາລັບການປົກປ້ອງ ແລະ ຜົນປະໂຫຍດຂອງຊຸມຊົນທີ່ເພິ່ງພາອາໄສປ່າໄມ້, ລວມທັງ ຊົນເຜົ່າພື້ນເມືອງ, ຊຸມຊົນທ້ອງຖິ່ນ, ແມ່ຍິງ ແລະ ກຸ່ມທີ່ຖືກກີດກັ້ນໂອກາດອື່ນໆ, ຜູ້ທີ່ຖືກກີດກັ້ນຕາມປະເພນີຈາກຂະບວນການເຊື່ອມດ້ານເສດຖະກິດ-ສັງຄົມ ແລະ ການເມືອງ. ໃນວຽກງານ ເຣດ+ ສະຖານະການເຊັ່ນນີ້ ເຮັດໃຫ້ພວກເຂົາເຈົ້າເສຍປຽບ ທາງດ້ານສິດທິມະນຸດ ແລະ ເພື່ອຮຽກຮ້ອງເອົາຜົນປະໂຫຍດຈາກການຈັດຕັ້ງປະຕິບັດ ເຣດ+. ການຄຸ້ມກັນຂອງ ເຣດ+ ເຮັດໃຫ້ກຸ່ມທີ່ຖືກກີດກັ້ນ ສາມາດຮູ້ໄດ້ສິດທິທັງໝົດຂອງພວກເຂົາເຈົ້າ ແລະ ມີທາງເລືອກ ຊຶ່ງເຮັດໃຫ້ສາມາດປັບປຸງພາລະບົດບາດຂອງຊຸມຊົນເຫຼົ່ານີ້ໃນຂະບວນການຕັດສິນໃຈ, ແລະ ຮັບຜົນປະໂຫຍດຈາກກົນໄກຂອງ ເຣດ+ ໃນອະນາຄົດ.

## ສ.ປ.ປ.ລາວ

ນອກຈາກວຽກຂອງຄອບຄົວແລ້ວ, ລັດຖະທໍາມະນູນ ປີ 1991 ຂອງ ສປປ.ລາວ ຍັງໄດ້ຮັບປະກັນສິດທິເທົ່າທຽມກັນຂອງທັງຜູ້ຊາຍ ແລະ ແມ່ຍິງ ທາງດ້ານການເມືອງ, ວັດທະນະທໍາ ແລະ ສັງຄົມອີກດ້ວຍ. ໃນປີ 2003, ໄດ້ມີການດັດແກ້ລັດຖະທໍາມະນູນຢັ້ງຢືນຄວາມພະຍາຍາມ “ສະໜັບສະໜູນຄວາມກ້າວໜ້າຂອງແມ່ຍິງ ແລະ ປົກປ້ອງສິດທິ ແລະ ຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍ ຂອງແມ່ຍິງ ແລະ ເດັກນ້ອຍ” ສ.ປ.ປ.ລາວ ເປັນປະເທດທີ່ລົງນາມໃນສົນທິສັນຍາ CEDAW ແລະ ໄດ້ເຂົ້າຮ່ວມເຫັນດີເຫັນພ້ອມກັບໂລກກ່ຽວກັບຖະແຫລງການປັກກິ່ງ ແລະ ນະໂຍບາຍເພື່ອປະຕິບັດ. ໃນປີ 2003, ລັດຖະບານຂອງ ສປປ.ລາວ ໄດ້ສ້າງຕັ້ງຄະນະກໍາມາທິການແຫ່ງຊາດເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງຂຶ້ນ (ຄກມຊ-NCAW) ເພື່ອຊ່ວຍລັດຖະບານ ໃນການສ້າງຍຸດທະສາດ ແລະ ນະໂຍບາຍ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ. ສະຫະພັນແມ່ຍິງລາວ, ອົງການຈັດຕັ້ງມະຫາຊົນ, ແມ່ນພາກສ່ວນກ່ຽວຂ້ອງທີ່ສໍາຄັນ ໃນຂະບວນການນີ້, ທີ່ມີປະສົບການມາກວ່າ 50 ປີ ໃນການຊ່ວຍສົ່ງເສີມກິດຈະກໍາການສ້າງລາຍໄດ້ຂອງແມ່ຍິງຜ່ານການພັດທະນາຂີດຄວາມສາມາດໃນຂະແໜງການກະສິກໍາ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

ສ.ປ.ປ.ລາວ ໄດ້ເລີ້ມມີນະໂຍບາຍປ່າໄມ້ ນັບຕັ້ງແຕ່ປີ 1987, ທີ່ກ່າວເຖິງການເຊື່ອມບົດບາດຍິງ-ຊາຍ. ເຖິງຢ່າງໃດກໍ່ຕາມ, ເຖິງວ່າຈະມີມາດຕະການທາງດ້ານນະໂຍບາຍ ແລະ ສະຖາບັນການຈັດຕັ້ງຮັບຜິດຊອບ, ແຕ່ກໍ່ຍັງມີຊ່ອງຫວ່າງຢູ່, ໂດຍສະເພາະ ກ່ຽວກັບເລື້ອງຂະບວນການທີ່ກ່ຽວຂ້ອງກັບການກໍານົດ ແລະ ການປະຕິບັດນະໂຍບາຍ. ເນື່ອງຈາກວ່າຍັງມີຄວາມບໍ່ຈະແຈ້ງໃນການກໍານົດກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບ



ຂອງຜູ້ຊາຍ ແລະ ແມ່ຍິງ ໃນກິດຈະກຳການຄຸ້ມຄອງປ່າໄມ້ຕ່າງໆ, ແລະ ການປະຕິບັດນະໂຍບາຍທີ່ເຮັດ ກໍ່ຍັງບໍ່ໄດ້ດີ, ຊ່ອງຫວ່າງບົດບາດຍິງ-ຊາຍຢູ່ໃນຂະແໜງການປ່າໄມ້ ກໍ່ຍັງຄົງຄ້າງບໍ່ທັນໄດ້ຮັບການແກ້ໄຂເທື່ອ.

ສປປ.ລາວ ໄດ້ກະກຽມບົດສະເໜີແຜນກຽມຄວາມພ້ອມກ່ຽວກັບ ເຣດ+ (R-PP), ສ່ວນແຜນການກ່ຽວກັບ ເຣດ+ ຍັງບໍ່ທັນໄດ້ພັດທະນາເທື່ອ. ການທົບທວນເອກະສານບົດສະເໜີແຜນກຽມຄວາມພ້ອມກ່ຽວກັບ ເຣດ+ ສະແດງໃຫ້ເຫັນເຖິງການອ້າງອີງກ່ຽວກັບ “ບົດບາດຍິງ-ຊາຍ” ທີ່ກ່ຽວພັນກັບການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສະພາບແວດລ້ອມຂອງ ເຣດ+. ການອ້າງອີງເຖິງແມ່ຍິງ ແມ່ນໄດ້ສ້າງຂຶ້ນພຽງແຕ່ສອງຄັ້ງໃນເອກະສານທັງໝົດ, ທັງສອງເອກະສານແມ່ນພວມກຳລັງປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຢູ່. ການປຶກສາຫາລືໃນໄລຍະກະກຽມບົດສະເໜີແຜນກຽມຄວາມພ້ອມກ່ຽວກັບ ເຣດ+ ແມ່ນຈັດສະເພາະກັບພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງຢູ່ໃນລະດັບຊາດ ແລະ ລະດັບແຂວງເທົ່ານັ້ນ ຊຶ່ງກິດຈະກຳກຽມຄວາມພ້ອມກ່ຽວກັບ ເຣດ+ ພວມກຳລັງຈະໄດ້ຮັບການພິຈາລະນາ. ສະຫະພັນແມ່ຍິງລາວ ໄດ້ຮ່ວມປຶກສາຫາລືໃນກອງປະຊຸມປຶກສາຫາລືຄັ້ງທີສອງເທົ່ານັ້ນ ເພື່ອຜ່ານຮ່າງບົດສະເໜີແຜນກຽມຄວາມພ້ອມ. ຢ່າງໃດກໍ່ຕາມ, ຈາກເອກະສານກໍ່ຍັງບໍ່ຈະແຈ້ງວ່າ ສະຫະພັນແມ່ຍິງລາວໄດ້ເຂົ້າຮ່ວມພົວພັນໃນການປຶກສາຫາລືນັບຕັ້ງແຕ່ຕົ້ນໃນການສ້າງບົດສະເໜີແຜນກຽມຄວາມພ້ອມແຫ່ງຊາດ ກ່ຽວກັບເຣດ+ ແລະ ໃນໄລຍະຂະບວນການພັດທະນາໃນເວລາຕໍ່ມາ. ເພາະສະນັ້ນ, ຂະບວນການພັດທະນາບົດສະເໜີແຜນກຽມຄວາມພ້ອມແຫ່ງຊາດກ່ຽວກັບເຣດ+, ດັ່ງໄດ້ສັງລວມໄວ້ຢູ່ເທິງນັ້ນ, ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ບໍ່ໄດ້ມີສຸມໃສ່ການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນນະໂຍບາຍ ແລະ ແຜນການຂອງ ເຣດ + ຢູ່ ສປປ.ລາວ ເທົ່າທີ່ຄວນ, ຄືເຊັ່ນ ປັດຈຸບັນນີ້.

## ປະເທດ ມຽນມາ:

ປະເທດ ມຽນມາ ເປັນປະເທດທີ່ລົງລາຍເຊັນໃນສົນທິສັນຍາ CEDAW. ປະເທດມຽນມາ ໄດ້ຮ່າງແຜນປະຕິບັດງານເພື່ອຄວາມກ້າວໜ້າຂອງແມ່ຍິງ (2011-2015). ແຜນປະຕິບັດງານ ລະບຸວ່າ ແມ່ຍິງທຸກຄົນຂອງປະເທດມຽນມາ ໄດ້ຮັບອຳນາດ ແລະ ສາມາດມີສິດທິຢ່າງເຕັມສ່ວນ ພ້ອມດ້ວຍການສະໜັບສະໜູນຈາກລັດຖະບານຂອງສະຫະພາບມຽນມາ. ກົມສະຫວັດດີການສັງຄົມພາຍໃຕ້ກະຊວງສະຫວັດດີການສັງຄົມ, ການບັນເທົາທຸກ ແລະ ການຕັ້ງຖິ່ນຖານໃໝ່ ຂອງລັດຖະບານຂອງສະຫະພາບມຽນມາເປັນອົງການທີ່ມີອຳນາດສິດຂາດທີ່ຮັບຜິດຊອບໃນການສົ່ງເສີມການບໍລິການທາງດ້ານສະຫວັດດີການສັງຄົມແກ່ກຸ່ມຜູ້ດ້ອຍໂອກາດ, ລວມທັງແມ່ຍິງ, ບົນພື້ນຖານຂອງຍຸດທະສາດການເຊື່ອມໂຍງທາງດ້ານສັງຄົມ. ປະເທດມຽນມາຍັງໄດ້ສ້າງຕັ້ງຄະນະກຳມະທິການແຫ່ງຊາດມຽນມາ ເພື່ອດຳເນີນວຽກຂອງແມ່ຍິງ (MNCWA) ໃນປີ 1996

ເພື່ອເສີມຂະຫຍາຍຄວາມກ້າວໜ້າຂອງແມ່ຍິງ. ຕໍ່ມາໄດ້ສ້າງຕັ້ງຄະນະກຳມະທິການປະຕິບັດງານແຫ່ງຊາດມຽນມາ ກ່ຽວກັບວຽກຂອງແມ່ຍິງກໍ່ໄດ້ຖືກສ້າງຕັ້ງຂຶ້ນ,ຕາມມາດ້ວຍ ການສ້າງຕັ້ງຄະນະກຳມະທິການກ່ຽວກັບວຽກຂອງແມ່ຍິງຢູ່ລະດັບລັດ (ແຂວງ), ພະແນກ, ເມືອງ, ຕາແສງ.ໃນປີ 2003, ໄດ້ສ້າງຕັ້ງສະຫະພັນແມ່ຍິງມຽນມາຂຶ້ນ ເພື່ອຊ່ວຍຄະນະກຳມະທິການແຫ່ງຊາດມຽນມາເພື່ອສະໜັບສະໜູນວຽກຂອງແມ່ຍິງ (MNCWA) ປະຕິບັດໜ້າທີ່ໃນການພັດທະນາ ແລະ ຮັບປະກັນຄວາມໝັ້ນຄົງຂອງແມ່ຍິງ ແລະ ເສີມຂະຫຍາຍການຮ່ວມມືກັບອົງການຈັດຕັ້ງທີ່ບໍ່ສັງກັດລັດ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ. ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+, ປະເທດມຽນມາຫາກໍ່ເລີ້ມຮ່າງແຜນກຽມຄວາມພ້ອມກ່ຽວກັບ ເຣດ+ ແຫ່ງຊາດ. ໃນບັນດາກຸ່ມວິຊາການສາມກຸ່ມທີ່ແຕ່ງຕັ້ງຂຶ້ນເພື່ອສະໜັບສະໜູນຂະບວນການພັດທະນາ ແຜນກຽມຄວາມພ້ອມ, ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ກຸ່ມປະຕິບັດການຄຸ້ມກັນ ແມ່ນຮັບຜິດຊອບ ເພື່ອຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ຊຶ່ງຕາງໜ້າ ຫຼື ສະໜັບສະໜູນແມ່ຍິງ ແລະ ກຸ່ມຊົນເຜົ່າສ່ວນໜ້ອຍ / ຄົນພື້ນເມືອງ (ລວມທັງເຄືອຂ່າຍຂອງພວກເຂົາເຈົ້າ), ແລະ ການເຊື່ອມໂຍງຜົນປະໂຫຍດ ແລະ ພາລະບົດບາດທີ່ມີທ່າແຮງບົ່ມຊ້ອນຂອງພວກເຂົາເຈົ້າ ເຂົ້າໃນຂະບວນການກຽມຄວາມພ້ອມກ່ຽວກັບເຣດ+.

## ປະເທດ ເນປານ:

ປະເທດ ເນປານໄດ້ເຊັນຮັບເອົາສົນທິສັນຍາ CEDAW ແລະ ມີແນວທາງນະໂຍບາຍເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ແລະ ການເຂົ້າຮ່ວມທາງສັງຄົມ (GESI) ໃນທຸກໆແຜນງານພັດທະນາຂອງປະເທດ. ແນວທາງນະໂຍບາຍ ໄດ້ຊຸກຍູ້ການເຂົ້າຮ່ວມຂອງພົນລະເມືອງ ບໍ່ດັ່ງນັ້ນ ຜູ້ທີ່ຖືກກີດກັ້ນໂອກາດ ເນື່ອງມາຈາກວ່າເປັນຊົນເຜົ່າ, ຄວາມເປັນພິການ, ເພດ, ສັນຊາດ, ຄວາມຄິດເຫັນທາງດ້ານການເມືອງ, ເຊື້ອຊາດ, ຊັ້ນວັນນະ, ຫຼື ສາສະໜາ, ແລະ ພ້ອມທັງຮັບຮູ້ວ່າ ອາດຕ້ອງໄດ້ມີການຮັບຮອງສຳລັບກຸ່ມຄົນທຸກຍາກ ແລະ ກຸ່ມທີ່ຖືກກີດກັ້ນໂອກາດໄວ້.



ໃນປີ 1995, ປະເທດ ເນປານໄດ້ສ້າງຕັ້ງກະຊວງຂອງແມ່ຍິງ, ເດັກນ້ອຍ ແລະ ສະຫວັດດີການສັງຄົມ. ກະຊວງໄດ້ມີການເຄື່ອນໄຫວ ໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນແຜນການ, ນະໂຍບາຍ, ແລະ ແຜນງານພັດທະນາແຫ່ງຊາດ; ສົ່ງເສີມການໃຫ້ອຳນາດແກ່ແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ; ລິເລີ່ມມາດຕະການເພື່ອກຳຈັດອຸປະສັກທາງດ້ານສັງຄົມ-ວັດທະນະທຳ, ການຈັດຕັ້ງ ແລະ ພຶດຕິກຳທີ່ມີຕໍ່ການມີສ່ວນຮ່ວມທັງໝົດ ແລະ ຄວາມເທົ່າທຽມຂອງແມ່ຍິງ ໃນການພັດທະນາແຫ່ງຊາດ.

ປະເທດ ເນປານ ເຫັນວ່າເປັນປະເທດກ້າວໜ້າທີ່ສຸດ ໃນການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນເປົ້າໝາຍ, ນະໂຍບາຍ, ແລະ ໂຄງການຂອງຂະແໜງການປ່າໄມ້ ເມື່ອສົມທຽບໃສ່ບັນດາປະເທດທີ່ມີໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ອື່ນໆ. ການປັບປຸງນະໂຍບາຍບໍ່ດົນມານີ້ຢູ່ໃນປະເທດ ເນປານ ໄດ້ຮັບຮູ້ສິດທິໃໝ່ ສຳລັບແມ່ຍິງເພື່ອເປັນເຈົ້າຂອງດິນ ແລະ ແກ້ໄຂໃນການຕັດສິນບັນຫາຂອງພວກເຂົາເຈົ້າໃນລະດັບສູງສຸດ ສະຖິຕິຫຼ້າສຸດ ໃຫ້ຮູ້ວ່າ ເກືອບໜຶ່ງສ່ວນສີ່ຂອງປ່າໄມ້ຂອງປະເທດ ແມ່ນຄຸ້ມຄອງໂດຍກຸ່ມນຳໃຊ້ປ່າໄມ້ຊຸມຊົນທ້ອງຖິ່ນ (CFUGs), ເປັນຈຳນວນຫຼາຍກວ່າ 17.800 ກຸ່ມ. ເກືອບ 31% ຂອງສະມາຊິກຂອງກຸ່ມນຳໃຊ້ປ່າໄມ້ຊຸມຊົນທ້ອງຖິ່ນ ເປັນແມ່ຍິງ ແລະ ຫຼາຍກວ່າ 800 ກຸ່ມ ແມ່ນນຳພາໂດຍສະມາຊິກເພດຍິງເທົ່ານັ້ນ.

ໃນບັນດາອົງການຈັດຕັ້ງສັງຄົມພົນລະເຮືອນ, ສະມາຄົມຄຸ້ມຄອງຊັບພະຍາກອນທຳມະຊາດຂອງແມ່ຍິງຂັ້ນຮາກຖານຊາວຮີມາໄລຢັນ (HIMAWANTI) ແລະ ສະຫະພັນຜູ້ນຳໃຊ້ປ່າໄມ້ຊຸມຊົນ (FECOFUN) ຖືກຍອມຮັບໂດຍສາກົນ ແລະ ເປັນບັນດາອົງການຈັດຕັ້ງນຳໜ້າ, ສົ່ງເສີມສິດທິຂອງແມ່ຍິງ ໃນການຄຸ້ມຄອງປ່າໄມ້.

ຢ່າງໃດກໍ່ຕາມ, ຂະບວນການ ເຣດ+ ຢູ່ໃນປະເທດ ເນປານ ຍັງບໍ່ທັນໄດ້ພັດທະນາມາດຕະການທີ່ມີປະສິດທິຜົນ ເພື່ອເຮັດໃຫ້ແມ່ຍິງເຂົ້າຮ່ວມພົວພັນໃນຂະບວນການຕັດສິນໃຈ, ແມ່ນແຕ່ບົດສະເໜີແຜນການກຽມຄວາມພ້ອມ ເຣດ+ ແຫ່ງຊາດ (R-PP) ກໍ່ຍັງລະບຸວ່າ ແມ່ຍິງເປັນສະມາຊິກທີ່ດ້ອຍໂອກາດຂອງຊຸມຊົນ





ໃນການປ່ຽນແປງດິນຟ້າອາກາດ ແລະ ເຣດ+. ອົງການຈັດຕັ້ງຕົ້ນຕໍທີ່ປະຕິບັດ ເຣດ+ - ກະຊວງອະນຸລັກດິນ ແລະ ປ່າໄມ້ ຂອງປະເທດ ເນປານ (MFSC), ມີພຽງແຕ່ແມ່ຍິງສອງຄົນຈາກພະນັກງານ 16 ຄົນ. ນອກຈາກນັ້ນ, ການປຶກສາຫາລື ໄດ້ສະເໜີ ໃຫ້ເປັນຍຸດທະສາດດຽວ ເພື່ອແກ້ໄຂປະເດັນບັນຫາຂອງບົດບາດຍິງ-ຊາຍ ໃນ ເຣດ+, ພາຍໃນບົດສະເໜີແຜນການກຽມຄວາມພ້ອມກ່ຽວກັບ ເຣດ+ ແຫ່ງຊາດ (R-PP). ເຖິງແມ່ນວ່າ ການຮຽກຮ້ອງໃຫ້ນຳໃຊ້ເວທີຂອງພາກສ່ວນທີ່ກ່ຽວຂ້ອງຫຼາຍພາກສ່ວນ, ຫຼັກຖານການເຊື່ອມໂຍງຜົນປະໂຫຍດ ຂອງບົດບາດຍິງ-ຊາຍ ເຂົ້າໃນກອງປະຊຸມຂອງພາກສ່ວນທີ່ກ່ຽວຂ້ອງ, ອົງການຈັດຕັ້ງທີ່ວາງນະໂຍບາຍກ່ຽວກັບ ເຣດ+ ຫຼື ໃນເນື້ອໃນຂອງບົດສະເໜີແຜນການກຽມຄວາມພ້ອມເຣດ+ແຫ່ງຊາດ (R-PP) ແມ່ນບໍ່ມີ.

## ປະເທດ ຫວຽດນາມ:

ປະເທດ ຫວຽດນາມ ຖືວ່າເປັນຜູ້ນຳ ໃນຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ຢູ່ໃນພາກພື້ນ ອາຊີ-ປາຊີຟິກ. ສ່ວນໜຶ່ງ ແມ່ນຍ້ອນກອບກົດໝາຍ ແລະ ນະໂຍບາຍ ທີ່ເຂັ້ມແຂງ, ທີ່ໃຫ້ແມ່ຍິງຫວຽດນາມ ມີລະບົບສິດທິ, ລວມທັງ ນະໂຍບາຍທີ່ຮັບຮອງການມີສ່ວນຮ່ວມທາງດ້ານການເມືອງ, ໄດ້ຮັບຜົນປະໂຫຍດຫລາຍ ໃນການມີລູກ, ແລະ ສິດທິໃນການຕັດສິນໃຈສືບພັນ. ປະເທດ ຫວຽດນາມ ໄດ້ເຊັນຮັບເອົາສົນທິສັນຍາ CEDAW ແລະ ກົດໝາຍຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ. ປະເທດ ຫວຽດນາມ ຍັງມີຄະນະກຳມະການ ລະຫວ່າງກະຊວງເພື່ອຕາງໜ້າແມ່ຍິງ, ເອີ້ນວ່າ ຄະນະກຳມະທິການແຫງຊາດເພື່ອຄວາມກ້າວໜ້າຂອງ ແມ່ຍິງ (NCFAW). ມີເຄືອຂ່າຍຂອງຄະນະກຳມະທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ (CFAWs) ຢູ່ທຸກກະຊວງ, ອົງການ ແລະ ທຸກແຂວງຂອງປະເທດ, ພາຍໃຕ້ ຄະນະກຳມະທິການແຫ່ງຊາດເພື່ອຄວາມກ້າວໜ້າ ຂອງແມ່ຍິງ. ນອກນັ້ນ, ສະຫະພັນແມ່ຍິງຫວຽດນາມ ແມ່ນອົງການຈັດຕັ້ງມະຫາຊົນ, ຊຶ່ງປຸກລະດົມ ແມ່ຍິງຫວຽດນາມແຕ່ລະດັບສູນກາງຈົນຮອດລະດັບຮາກຖານ ແລະ ເຮັດວຽກຢ່າງໃກ້ຊິດຮ່ວມກັບເຄືອຂ່າຍຂອງ ຄະນະກຳມະທິການເພື່ອຄວາມກ້າວໜ້າຂອງແມ່ຍິງ (CFAWs). ປະເທດຫວຽດນາມ ຍັງຈັດຕັ້ງປະຕິບັດຫຼາຍໆ ໂຄງການເພື່ອປັບປຸງຊີວິດການເປັນຢູ່ຂອງແມ່ຍິງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ.

ຢ່າງໃດກໍ່ຕາມ, ຍັງມີຂົງເຂດອື່ນ ຊຶ່ງຄວາມບໍ່ສະເໝີພາບບົດບາດຍິງ-ຊາຍ ມີຢູ່ທົ່ວໄປໃນປະເທດ ຫວຽດນາມ. ສິ່ງເຫຼົ່ານີ້ລວມມີ ຄວາມດ້ອຍໂອກາດຂອງຄົວເຮືອນທີ່ມີເພດຍິງເປັນຫົວໜ້າຄອບຄົວ ເຊັ່ນວ່າ: ແມ່ຍິງ ເຮັດວຽກຫຼາຍຊົ່ວໂມງກວ່າຜູ້ຊາຍ ແຕ່ໄດ້ຄ່າຈ້າງໜ້ອຍກວ່າ; ການເຂົ້າເຖິງຊັບພະຍາກອນທີ່ຈຳກັດຂອງ ແມ່ຍິງ ເຊັ່ນ ດິນ, ຊັບສິນ, ສິນເຊື່ອທີ່ເປັນທາງການ ແລະ ການຝຶກວຽກເຮັດງານທຳ ຫຼື ການພັດທະນາທັກສະ; ແລະ ການເປັນຕົວແທນໃນຕຳແໜ່ງຕັດສິນໃຈ ຍັງເຮັດບໍ່ທັນໄດ້ດີ; ໂດຍສະເພາະ ຢູ່ໃນລະດັບທ້ອງຖິ່ນ.

ພາຍໃນຂະແໜງການປ່າໄມ້, ລັດຖະທຳມະນູນຂອງປະເທດ ຫວຽດນາມ ອອກຄຳສັ່ງໃຫ້ຊັບພະຍາກອນປ່າໄມ້ທັງໝົດ (ລວມທັງດິນ, ຕົ້ນໄມ້, ແລະ ສັດປ່າ) ແມ່ນຢູ່ພາຍໃຕ້ກຳມະສິດຂອງປະຊາຊົນ. ອີງຕາມຂໍ້ມູນຂອງກົມປ້ອງກັນປ່າໄມ້ ໃນປີ 2011, ຄົວເຮືອນສ່ວນບຸກຄົນ ແລະ ປະຊາຊົນທ້ອງຖິ່ນຖືກຳມະສິດເກືອບ 28% ຂອງເນື້ອທີ່ດິນທັງໝົດ. ຢ່າງໃດກໍ່ຕາມ, ອີງຕາມກົດໝາຍທີ່ດິນໃນປີ 2003, ໃບຢັ້ງຢືນການຖືຄອງທີ່ດິນ (ຊຶ່ງໃຫ້ສິດໃນປ່າໄມ້ເປັນສິນຄ້າ) ໃນປັດຈຸບັນ ສາມາດລົງລາຍເຊັນ ທັງຜົວ ແລະ ເມຍ ອະນຸຍາດໃຫ້ໃບຕາດິນຮ່ວມກັນ. ຢ່າງໃດກໍ່ຕາມ, ຄວາມຮັບຮູ້ກ່ຽວກັບກົດໝາຍດັ່ງກ່າວນີ້ຍັງຕໍ່າຫຼາຍ, ແລະ ການອອກໃບຕາດິນແມ່ນຜູ້ຊາຍຍັງໄດ້ປຽບ. ນອກຈາກນັ້ນ, ການປະຕິບັດທີ່ມີຢູ່ໃນການແບ່ງດິນແບ່ງປ່າໃຫ້ແກ່ຄົວເຮືອນ, ເພື່ອບົວລະບັດຮັກສາ ແລະ ຄຸ້ມຄອງ, ມີແນວໂນ້ມປະຕິເສດການປະກອບສ່ວນທາງດ້ານແຮງງານ ແລະ ຄວາມຮູ້ຂອງແມ່ຍິງ. ໃນແງ່ຂອງ ເຣດ+, ເອກະສານຂອງບົດສະເໜີແຜນການກຽມຄວາມພ້ອມ ເຣດ+ ແຫ່ງຊາດຈາກຫວຽດນາມໄດ້ເໜັ້ນໃສ່ ການພິຈາລະນາເປັນພິເສດເພື່ອສິດທິ ແລະ ການດຳລົງຊີວິດຂອງຊົນເຜົ່າ, ປະເດັນບົດບາດຍິງ-ຊາຍ, ແລະ ການປົກຄອງ ໃຫ້ເປັນພາກສ່ວນໜຶ່ງຂອງເສັ້ນທຽບຖານ ແລະ ການປະເມີນຜົນກະທົບ. ໂຄງການ ເຣດ + ຈຳນວນໜຶ່ງທີ່ກຳລັງດຳເນີນຢູ່, ໂດຍສະເພາະຢູ່ພາຍໃຕ້ແຜນງານ UN-REDD, ໄດ້ປະກອບສ່ວນຫລາຍ ເພື່ອເຊື່ອມບົດບາດຍິງ-ຊາຍ ເຂົ້າໃນກິດຈະກຳ. ບາງໂຄງການລວມເອົາການນຳໃຊ້ຫຼັກການ FPIC ຢ່າງກວ້າງຂວາງກັບຊຸມຊົນທ້ອງຖິ່ນ, ລວມທັງແມ່ຍິງ, ເຮັດໃຫ້ເກີດມີການຮັບຮູ້ທີ່ດີຂຶ້ນກ່ຽວກັບລັກສະນະ ແລະ ຜົນປະໂຫຍດຈາກແຜນງານ, ກໍ່ຄືມີຄວາມຮັບຜິດຊອບໃນການປົກປັກຮັກສາປ່າໄມ້ທີ່ດີຂຶ້ນ. ຄະນະກຳມະການຄຸ້ມຄອງປ່າໄມ້ ເຮັດວຽກຢ່າງໃກ້ຊິດຮ່ວມກັບຊຸມຊົນທ້ອງຖິ່ນ, ລວມທັງແມ່ຍິງ, ກ່ຽວກັບໂຄງການເຣດ+, ຊຶ່ງໄດ້ຊ່ວຍສ້າງຄວາມເຊື່ອໝັ້ນຂອງພວກເຂົາເຈົ້າເພື່ອສົນທະນາກ່ຽວກັບຄວາມເປັນຫ່ວງ ແລະ ປະເດັນບັນຫາຂອງພວກເຂົາເຈົ້າ ຮ່ວມກັບຄະນະກຳມະການຄຸ້ມຄອງປ່າໄມ້.




# ພາກທີ 4: ການພັດທະນາຂີດຄວາມສາມາດ

# ຄຳຖາມທີ 9.

## ປະເດັນສຳຄັນກ່ຽວກັບບົດບາດຍິງ-ຊາຍທີ່ຈະຕ້ອງໄດ້ເອົາໃຈໃສ່ໃນເວລາດຳເນີນກິດຈະກຳປູກຈິດສຳນຶກ ຢູ່ຂັ້ນຮາກຖານກ່ຽວກັບ ເຣດ+ ມີຫຍັງແດ່?

ໃນເວລາດຳເນີນກິດຈະກຳການປູກຈິດສຳນຶກກ່ຽວກັບ ເຣດ+ ຢູ່ລະດັບຊຸມຊົນ, ມີຫລາຍຢ່າງທີ່ຈະຕ້ອງໄດ້ຄຳນຶງເຖິງ ຊຶ່ງສາມາດຊ່ວຍໃນການອຳນວຍຄວາມສະດວກ ເພື່ອໃຫ້ເຂົ້າໃຈຄວາມຕ້ອງການບົດບາດຍິງ-ຊາຍ. ຢ່າງໃດກໍ່ຕາມ, ຈຳເປັນທີ່ຈະຕ້ອງໄດ້ເອົາໃຈໃສ່ພິຈາລະນາຈຸດຕ່າງໆທີ່ລະບຸໄວ້ລຸ່ມນີ້ ເພື່ອເປັນທິດທາງສຳລັບປັບປຸງຜົນກະທົບໃຫ້ດີຂຶ້ນ ຫຼາຍກວ່າເປັນລາຍການຂໍ້ບັງຄັບ; ດ້ວຍເຫດນີ້ ຜູ້ອຳນວຍຄວາມສະດວກທ້ອງຖິ່ນ ຈະຕ້ອງໄດ້ດັດແປງ ຫຼື ແກ້ໄຂ ແຕ່ລະຈຸດ ໂດຍອີງໃສ່ສະພາບ ແລະ ສະຖານະການທາງດ້ານສັງຄົມ ແລະ ວັດທະນະທຳຂອງພວກເຂົາເຈົ້າ:

- **ຮັບຮູ້ ແລະ ເຄົາລົບຄຸນຄ່າທາງດ້ານວັດທະນະທຳ-ສັງຄົມຂອງທ້ອງຖິ່ນ:** ກ່ອນດຳເນີນແຜນງານປູກຈິດສຳນຶກກ່ຽວກັບ ເຣດ+ ຢູ່ລະດັບທ້ອງຖິ່ນ, ຜູ້ອຳນວຍຄວາມສະດວກ ຄວນຮັບຮູ້ຄຸນຄ່າທາງດ້ານວັດທະນະທຳ-ສັງຄົມ ແລະ ຮູບແບບຂອງພົນລະເມືອງ, ໂດຍສະເພາະ ຈຳພວກທີ່ປະສົບຜົນສຳເລັດໃນການລວມເອົາແມ່ຍິງເຂົ້າຮ່ວມ ແລະ ການສົ່ງເສີມການມີສ່ວນຮ່ວມ ໃນຂະບວນການຕັດສິນໃຈຢູ່ລະດັບທ້ອງຖິ່ນ, ແລະ ສ້າງບົນພື້ນຖານຜົນສຳເລັດເຫຼົ່ານັ້ນ.

- **ຮັບປະກັນການຈັດຫາສິ່ງທີ່ອຳນວຍຄວາມສະດວກທີ່ເໝາະສົມ:** ຜູ້ອຳນວຍຄວາມສະດວກ ຄວນຮັບຮູ້ກຳນົດເວລາທີ່ຕ້ອງການ ເພື່ອດຳເນີນແຜນງານຝຶກອົບຮົມ ແລະ ກິດຈະວັດປະຈຳວັນສຳລັບຜູ້ຊາຍ ແລະ ແມ່ຍິງ, ເພື່ອປັບປຸງການມີສ່ວນຮ່ວມໃນການຝຶກອົບຮົມ ແລະ ການພັດທະນາຂີດຄວາມສາມາດກ່ຽວກັບ ເຣດ+. ຄວນມີການກະກຽມເປັນພິເສດສຳລັບແມ່ທີ່ລ້ຽງລູກດ້ວຍນົມຕົນເອງ ແລະ ແມ່ຍິງທີ່ມີລູກນ້ອຍ, ເຊັ່ນວ່າການບໍລິການຮັບດູແລເດັກທີ່ໄວ້ໃຈໄດ້ ໃນກໍລະນີນີ້.

- **ສ້າງບົນພື້ນຖານຄວາມຮູ້ ແລະ ປະສົບການສະເພາະຂອງທ້ອງຖິ່ນ:** ປະຊາຊົນທ້ອງຖິ່ນ, ລວມທັງຜູ້ຊາຍ ແລະ ແມ່ຍິງ, ມີຄວາມຮູ້ ແລະ ປະສົບການທີ່ອຸດົມຮັ່ງມີກ່ຽວກັບດິນຟ້າອາກາດ, ຊັບພະຍາກອນປ່າໄມ້, ແລະ ການຄຸ້ມຄອງ ແລະ ນຳໃຊ້ຂອງທ້ອງຖິ່ນ. ຄວາມຮູ້ ແລະ ປະສົບການດັ່ງກ່າວນີ້ແຕກຕ່າງກັນ ອີງຕາມພາລະບົດບາດ ແລະ ຄວາມຮັບຜິດຊອບປະຈຳວັນຂອງທັງຜູ້ຊາຍ ແລະ ແມ່ຍິງ. ຍ້ອນສິ່ງທີ່ກ່າວມານີ້, ຜູ້ອຳນວຍຄວາມສະດວກຄວນຊຸກຍູ້ຜູ້ເຂົ້າຮ່ວມຊາຍ ແລະ ຍິງໃຫ້ສົນທະນາ ແລະ ແລກປ່ຽນຄວາມຮູ້, ແລະ ຊ່ວຍສ້າງຕັ້ງເວທີຮ່ວມກັນ. ບາດກ້າວທຳອິດແມ່ນຈະຕ້ອງເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈ ແລະ ຊ່ວຍໃຫ້ພວກເຂົາເຈົ້າເຂົ້າໃຈພື້ນຖານຄວາມຮູ້ ແລະ ປະສົບການຂອງກັນ ແລະ ກັນ. ບາດກ້າວຕໍ່ໄປອາດຈະລວມເອົາການສ້າງບົນພື້ນຖານຄວາມຮູ້ລວມໝູ່ ເພື່ອເຮັດໃຫ້ແນວຄວາມຄິດ, ຄຳສັບວິຊາການ, ແລະ ການອະທິບາຍທາງວິທະຍາສາດກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ງ່າຍຂຶ້ນ. ຂະບວນການດັ່ງກ່າວນີ້ສາມາດຊ່ວຍຜູ້ເຂົ້າຮ່ວມຍິງ ແລະ ຊາຍໃຫ້ເຂົ້າໃຈຄວາມຮູ້ໃໝ່ໄດ້ງ່າຍຂຶ້ນ.

- **ຫຼີກລ່ຽງພາສາວິຊາການ:** ພາສາຂອງການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ແມ່ນເຕັມໄປດ້ວຍຄຳສັບວິຊາການ, ຊຶ່ງຈະເຂົ້າໃຈບໍ່ໄດ້ງ່າຍໆ ໂດຍພາກສ່ວນທີ່ກ່ຽວຂ້ອງລະດັບຮາກຖານ ແລະ ຊຶ່ງເປັນ



ສິ່ງທ້າທາຍທີ່ຈະອະທິບາຍເປັນພາສາທີ່ງ່າຍດາຍ, ທັງເປັນພາສາອັງກິດ ຫຼື ພາສາທ້ອງຖິ່ນ. ການນໍາໃຊ້ຄໍາສັບເຊັ່ນນັ້ນ ບາງຄັ້ງອາດນໍາໄປສູ່ຄວາມສັບສົນກ່ຽວກັບແນວຄວາມຄິດຕົ້ນຕໍຂອງການປ່ຽນແປງດິນຟ້າອາກາດ ແລະ ເຣດ+, ນອກຈາກຄໍາສັບຕົ້ນຕໍສໍາລັບສົນທະນາກ່ຽວກັບບົດບາດຍິງ-ຊາຍ. ດັ່ງນັ້ນ, ຫາກເປັນໄປໄດ້, ຜູ້ອໍານວຍຄວາມສະດວກ ຄວນຊອກຫາຄໍາສັບທີ່ເໝາະສົມເປັນພາສາທ້ອງຖິ່ນ ຫຼື ພາສາຊົນເຜົ່າ (ທີ່ສອດຄ່ອງ) ໄວ້ລ່ວງໜ້າ, ແລະ ສ້າງເອກະສານກ່ຽວກັບຕົວຢ່າງຂອງທ້ອງຖິ່ນ ເພື່ອອະທິບາຍແນວຄວາມຄິດ ແລະ ປະເດັນທີ່ກ່ຽວຂ້ອງ, ເປັນພາສາທີ່ງ່າຍດາຍ.

- **ນໍາໃຊ້ອຸປະກອນຝຶກອົບຮົມທີ່ພຽງພໍ ແລະ ສອດຄ່ອງ:** ສະເໜີແນະໃຫ້ຜູ້ອໍານວຍຄວາມສະດວກ ກະກຽມການຝຶກອົບຮົມ ຫຼື ເຫດການໄວ້ລ່ວງໜ້າ ເພື່ອປະກອບຕົວຢ່າງ ແລະ ກໍລະນີສຶກສາຂອງທ້ອງຖິ່ນ, ຊຶ່ງສາມາດນໍາເອົາໄປໃຊ້ເປັນແຫຼ່ງຂໍ້ມູນ ເພື່ອເຮັດໃຫ້ເນື້ອໃນຝຶກອົບຮົມງ່າຍຂຶ້ນ. ໃນສະຖານະການທີ່ຜູ້ເຂົ້າຮ່ວມບໍ່ຮູ້ໜັງສື, ຄວນປະກອບຮູບພາບ, ເຄື່ອງປະຈັກຕາ ທີ່ມີການອອກແບບເປັນຢ່າງດີ ແລະ ເໝາະສົມ ແລະ ຄວນນໍາໃຊ້ວິທີການດຶງດູດຄວາມສົນໃຈອື່ນໆໃນການຝຶກອົບຮົມ, ລວມທັງປິດສະເຕີ ແລະ ວິດີໂອ.
- **ສ້າງເອກະສານການຮຽນຮູ້ສອງທາງ:** ໃນເວລາຝຶກອົບຮົມ ແລະ ດໍາເນີນກິດຈະກໍາປູກຈິດສໍານຶກ, ຜູ້ອໍານວຍຄວາມສະດວກ ຄວນສ້າງເອກະສານກ່ຽວກັບບົດຮຽນທີ່ຖອດຖອນໄດ້ ທີ່ກ່ຽວພັນກັບບົດບາດຍິງ-ຊາຍ, ໂດຍສະເພາະ ຕົວຢ່າງຂອງທ້ອງຖິ່ນ, ທີ່ແລກປ່ຽນໂດຍສໍາມະນາກອນໃນເວລາຈັດການຝຶກອົບຮົມຢູ່ລະດັບຮາກຖານ. ສິ່ງເຫຼົ່ານີ້ ແມ່ນມີຄວາມສໍາຄັນທີ່ສຸດ ແລະ ອາດສາມາດພິສູດວ່າ ມີປະໂຫຍດສໍາລັບການຝຶກອົບຮົມ ແລະ ການເຄື່ອນໄຫວປູກຈິດສໍານຶກຄັ້ງຕໍ່ໆໄປຢູ່ໃນລະດັບຕ່າງໆ ແລະ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຕ່າງກັນ.
- **ສ້າງຄູ່ຮ່ວມງານກັບບັນດາອົງການຈັດຕັ້ງທີ່ມີພາລະໜ້າທີ່ທີ່ຄ້າຍຄືກັນ:** ຂະບວນການເຊື່ອມບົດບາດຍິງ-ຊາຍ ໃນ ເຣດ+ ຄວນແນໃສ່ສ້າງຄວາມສາມາດໃນການນໍາພາສະຖາບັນ ແລະ ຂີດຄວາມສາມາດຂອງພາກສ່ວນທີ່ກ່ຽວຂ້ອງແມ່ຍິງຢູ່ໃນລະດັບຮາກຖານ, ຄຽງຄູ່ກັບສະຖາບັນທີ່ເປັນທາງການ ແລະ ບໍ່ເປັນທາງການ, ຊຶ່ງເປັນຜູ້ຕາງໜ້າໃຫ້ແມ່ຍິງ. ດັ່ງນັ້ນ,ຈະເປັນປະໂຫຍດສະເໜີທີ່ຈະຊອກຫາບັນດາອົງການຈັດຕັ້ງຄູ່ຮ່ວມງານ ຊຶ່ງເຮັດວຽກກ່ຽວກັບປະເດັນຂອງບົດບາດຍິງ-ຊາຍ ແລະ ເຮັດໃຫ້ບັນດາອົງການເຫຼົ່ານັ້ນເຂົ້າຮ່ວມພົວພັນໃນການຝຶກອົບຮົມ ແລະ ກິດຈະກໍາປູກຈິດສໍານຶກ.ຊຶ່ງຈະຊ່ວຍພັດທະນາຂີດຄວາມສາມາດຂອງພວກເຂົາເຈົ້າ ເພື່ອເປັນຕົວແທນ ແລະ ສື່ສານຄວາມປາດຖະໜາ ແລະຄວາມສົນໃຈຂອງແມ່ຍິງ ແລະ ປະກອບສ່ວນຢ່າງຫ້າວຫັນເຂົ້າໃນຂະບວນການນະໂຍບາຍ ເຣດ+ ພາຍໃນປະເທດ.

# ຄຳຖາມທີ 10.

## ໂຄງການສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ໄດ້ສົ່ງເສີມການເຊື່ອມປົດບາດຍິງ-ຊາຍ ເຂົ້າໃນການພັດທະນາ ຂີດຄວາມສາມາດກ່ຽວກັບວຽກງານ ເຣດ+ ຄືແນວໃດ?

ສູນຝຶກອົບຮົມປ່າໄມ້ຊຸມຊົນພາກພື້ນອາຊີ-ປາຊີຟິກ (RECOFTC) - ສູນສຳລັບປະຊາຊົນ ແລະ ປ່າໄມ້, ມີຄວາມເຊື່ອໝັ້ນຢ່າງແຮງກ້າວ່າ ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແມ່ນອົງປະກອບຕົ້ນຕໍສຳລັບການຄຸ້ມຄອງແລະນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນຍົງ ກໍ່ຄືການສະໜັບສະໜູນຫຼັກການກ່ຽວກັບຄວາມຍຸດຕິທຳທາງສັງຄົມ ແລະ ສິດທິມະນຸດ. ດັ່ງນັ້ນ, RECOFTC ມີຄວາມຕັ້ງໃຈໃນການເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນນະໂຍບາຍ ແລະ ແຜນງານຕ່າງໆ ເພື່ອສົ່ງເສີມຄວາມສະເໝີພາບ ແລະ ສິດທິໃນປ່າໄມ້ຊຸມຊົນ ແລະ ເຣດ+. ການສ້າງບົນພື້ນຖານວິທີການນີ້ ການເຊື່ອມບົດບາດຍິງ-ຊາຍ ຈຶ່ງເປັນສ່ວນໜຶ່ງທີ່ສຳຄັນຂອງໂຄງການສ້າງຂີດຄວາມສາມາດໃຫ້ແກ່ຂັ້ນຮາກຖານສຳລັບ ເຣດ+ ນັບຕັ້ງແຕ່ຂັ້ນຕອນການສ້າງແນວຄວາມຄິດຂອງໂຄງການ. ໂຄງການ ໄດ້ນຳໃຊ້ວິທີການເທື່ອລະຂັ້ນ ແລະ ເປັນລະບົບ ເພື່ອເຊື່ອມໂຍງການຝຶກອົບຮົມທີ່ເໜັ້ນບົດບາດຍິງ-ຊາຍ ແລະ ກິດຈະກຳພັດທະນາຂີດຄວາມສາມາດ ຢູ່ໃນບັນດາປະເທດຂອງໂຄງການ.

ວິທີການລວມມີ ການປະສານງານ ແລະ ການສ້າງຄູ່ຮ່ວມງານ ຢູ່ໃນບັນດາປະເທດຂອງໂຄງການ, ການວາງເປົ້າໝາຍທາງຍຸດທະສາດສຳລັບການພັດທະນາຂີດຄວາມສາມາດ ຢູ່ໃນລະດັບຮາກຖານ; ການພັດທະນາເອກະສານຝຶກອົບຮົມເປັນພາສາທ້ອງຖິ່ນ; ການເຜີຍແຜ່; ການສື່ສານ ແລະ ການສົ່ງເສີມ; ການຄົ້ນຄວ້າ; ການວິເຄາະ ແລະ ການສັງເຄາະ; ແລະ ການຕິດຕາມກວດກາ ແລະ ການປະເມີນຜົນ. ໃນແຕ່ລະປະເທດຂອງໂຄງການ, ພວກເຮົາແນໃສ່ ເພື່ອສ້າງຄູ່ຮ່ວມງານກັບບັນດາອົງການຄູ່ຮ່ວມງານພາຍໃນປະເທດທີ່ເຮັດວຽກກ່ຽວກັບປະເດັນບົດບາດຍິງ-ຊາຍ, ຊ່ວຍພວກເຂົາເຈົ້າ ເພື່ອເຊື່ອມບົດບາດຍິງ-ຊາຍ ເຂົ້າໃນ ເຣດ+ ຜ່ານກິດຈະກຳການພັດທະນາຂີດຄວາມສາມາດຕ່າງໆ. ໂຄງການ ຍັງສ້າງເອກະສານບົດຮຽນທີ່ຖອດຖອນໄດ້ຈາກການດຳເນີນການຝຶກອົບຮົມ ແລະ ກິດຈະກຳການພັດທະນາຂີດຄວາມສາມາດ ແລະ ສັງເຄາະເອົາບົດຮຽນ ເພື່ອນຳໃຊ້ ເຂົ້າໃນການປັບປຸງເອກະສານຝຶກອົບຮົມ, ການດຳເນີນການຝຶກອົບຮົມ ແລະ ແຜນງານພັດທະນາຂີດຄວາມສາມາດຕໍ່ໆໄປ. ການພັດທະນາຄູ່ມືຄຳຖາມ ແລະ ຄຳຕອບຫົວນີ້ ແມ່ນຕົວຢ່າງໜຶ່ງຂອງວິທີການນີ້.

RECOFTC

THE CENTER FOR PEOPLE AND FORESTS

ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບການປັບປຸງ ແລະ ປະຊາຊົນທ້ອງ ຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມໃນການດັດແປງພື້ນທີ່ປ່າໄມ້ ໃນເຂດ ພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

RECOFTC ຖືເປັນສະຖານທີ່ແຫ່ງດຽວ ແລະ ມີຄວາມສຳຄັນ ໃນໂລກຂອງປ່າໄມ້, ຊຶ່ງເປັນອົງການຈັດຕັ້ງສາກົນ ທີ່ບໍ່ຫວັງຜົນກຳໄລ ທີ່ເຮັດໜ້າທີສະເພາະ ໃນການພັດທະນາຄວາມສາມາດ ຂອງປ່າໄມ້ຊຸມຊົນ. RECOFTC ມີສ່ວນພົວພັນກັບເຄືອຂ່າຍທາງຍຸດທະສາດ ແລະ ຄູ່ຮ່ວມງານທີ່ດີກັບລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ອົງການພັດທະນາທາງສັງຄົມ, ພາກເອກະຊົນ, ປະຊາຊົນທ້ອງຖິ່ນ ແລະ ສະຖາບັນຄົ້ນຄວ້າ ແລະ ການສຶກສາໃນທົ່ວພາກພື້ນອາຊີ-ປາຊີຟິກ ແລະ ອື່ນໆ. ມີ ປະສົບການຂອງສາກົນ ແລະ ວິທີການເຄື່ອນໄຫວໃນການພັດທະນາຄວາມອາດສາມາດ -ທີ່ກ່ຽວຂ້ອງກັບການຄົ້ນຄວ້າ ແລະ ການວິໄຈ, ສະຖານທີ່ສາທິດ ແລະ ຜົນການຝຶກອົບຮົມ ມາກວ່າ 25 ປີ

RECOFTC – The Center for People and Forests
P.O. Box 1111
Kasetsart Post Office
Bangkok 10903, Thailand
Tel (66-2) 940-5700
Fax (66-2) 561-4880
info@recoftc.org
www.recoftc.org

Printed on recycled paper

GGCA Global Gender and Climate Alliance Member

Norad